(3) ນິນທິນລາວພວນ ຫລືນິນທິນອຸດອຣ ຫມາຍເຖິງເຂຕຄົນລາວພວນ ທີ່ຖືກກວາດຕ້ອນ ມາຈາກເຂຕເມືອງພວນ ຊຽງຂວາງທ້າຫນ້ດ ຫລືຫມາຍເຖິງແຂວງທີ່ຢູ່ຂອງລາວ ເຫລ່ານີ້ ທີ່ກະ ຈາຍຢູ່ໃນບໍຣິເວນ ອຸດອຣ.ຂອນແກ່ນ ນະຄອຣພະນົມ ສາກົລນະຄອຣ ຫນອງຄາຍ ແລະແຂວງ ເມືອງເລີຍ.

(4) ນິນທິນລາວກາງ ຫມາຍເຖິງເຂຕລາວເມືອງໂຄຣາຊ (ຢູ່ຣະຫວ່າງ ໄທຍ໌ ແລະລາວ)

ຄັນມາຮອດປີ ຄ.ສ.1906 ຫລື ພ.ສ.2449 ທາງການສຍາມ ໄດ້ປັບປຸງການປົກຄອງພວກຄົນ ລາວ-ສຍາມ ອີກຄັ້ງໃຫມ່ ຄືແບ່ງການປົກຄອງລາວ ແລະສລາຍຄວາມເປັນລາວ ທ້າຫນ້ດແລະ ແບ່ງອອກເປັນ 4 ນິນທິນ ຄື:

(1) ນິນທິນພາຍັພ ຫມາຍເຖິງພວກລາວລ້ານນາ (ຍຸດເອີ້ນລາວທ້າຫນ້ດ) ທີ່ຫມາຍເຖິງ ລາວຊຽງໃຫມ່ ລຳປາງ ລຳພນ ແພ ແລະນ່ານ.

(2) ນິນທິນອຸດອຣ ໄດ້ແກ່ພວກລາວ ຢູ່ແຂວງອຸດອຣ ຂອນແກ່ນ ນະຄອຣພະນົມ ສາກົລ ນະຄອຣ ຫນອງຄາຍ ແລະແຂວງເລີຍ ຈົນຮອດເຂຕອຸບົລ ສີສະເກຕ ບຸຣີຣັມຍ໌ ສຸຣິນທ໌ ໃຫ້ ເອີ້ນວ່າ ນິນທິນອີສານ ຫລືພາຄອີສານ ແລະ

(3) ນິນທິນ ນະຄອຣຣາຊສີມາ.

ຫລັງຕ່ມາ ຈຶ່ງປຽນຊື່ໃຫມ່ ຈາກຄຳວ່າ ພາຄອີສານ ໃຫ້ເອີ້ນໃຫມ ່ວ່າ ພາຄຕາ ວັນອອກສຽງເຫນືອ ເພື່ອບ່ໃຫ້ຄົນລາວອີສານ ຕົດຊື່ນີ້.

ชาติไทยสมัยพระเจ้าขุนรามคำแหง พ.ศ. ๑๘๒๑-๑๘๘๖



หลักฐาน กรมแผนที่ พ.ศ. 2478 แผนที่แสดงอาณาจักรไทยสมัยพระเจ้าขุนรามคำแหง

แผนที่ และประวัติศาสตร์ตอนหลังนี้: ถ้าจะอยู่ในฐานะดูรอ กับที่ ดร.นิธิ เอียวศรีวงศ์ อิจารณ์ไว้ (ในเบื้องหน้า.....) ประวัติศาสตร์ของไทย เป็นแผนประดิษฐ์ ให้ออกมา ในรูปรับใช้การเมืองๆ บ่แม่น วิชาการ โดยกัง.

ຂອງພຣະອາຈາຣຍ໌ບຸນມາ ຈະຕຸຣັສ ເຊິ່ງເປັນພຣະທຸດິຽ໌ ເດີນທາງມາເຜີຍແຜ່ສີລທັມ ໃຫ້ຊາວ ບ້ານນັບຖືສີລທັມ ຢ່າງເຄັ່ງຄັດ ບໍ່ໃຫ້ລັກບໍ່ໃຫ້ປຸ້ນ ໃຫ້ກິນຜັກ ແລະຫມາກໄມ້ ແທນເນື້ອສັຕ ສອນ ໃຫ້ນຶກເຖິງບຸນຄຸນ ຂອງບິດາມາຣດາ ແລະບັຣພະບຸຣຸສ ແລະ ທ່ານພຣະອາຈາຣຍ໌ບຸນມາ ຍັງສາ ມາຕຖ໌ຣັກສາຄົນເຈັບເປັນພຍາທຕ່າງໆໄດ້ອີກດວ້ຍ ພາໃຫ້ປະຊາຊົນລາວເຂຕນັ້ນ ໃຫ້ຄວາມນັບຖື ເຂົ້າເປັນສານຸສິສ ເຖິງ 4,000 ຄົນ. ຊາວບ້ານເອີ້ນພຣະອາຈາຣຍ໌ພວກນີ້ ວ່າ ເຈົ້າຜູ້ມີບຸນ.

ຂະບວນກຸ້ຊາຕ ຂອງພຣະອາຈາຣຍ໌ບຸນມາ ຈະຕຸຣັສ ຍັງໄດ້ທ່ຳການຸກຣະດົມປະຊາຊົນ (1) ໃນເຂຕນັ້ນ ໃຫ້ລະນຶກເຖິງຂະບວນກອບກູ້ອິສຣະພາພລາວ ຂອງສົມເດັຈພຣະເຈົ້າອະນຸ ອີກດວ້ຍ ແລະໃນເດືອນພຶສພາ ປີ 1924 ນັ້ນ ຂະບວນກຸ້ຊາຕ ຈ່ຳນວນ 50-60 ຄົນ ສແດງຄວາມກ້າຫານ ທີ່ ສຸດ ໂດຍໄດ້ຍົກຂະບວນໄປຂັບໄລ່ເຈົ້າຫນ້າທີ່ຣາຊການໄທຍ໌ ອອກຈາກອ່ຳເພ ວ້ງສະພຸ ແລະປະ ການສລົບລ້ງ ບໍ່ໃຫ້ປະຊາຊົນລາວ ເສັຽສ່ວຍໃຫ້ໄທຍ໌ ປີລະ 4 ບາທ ດັ່ງທີ່ເຄີຍ ຖືກບ້ງຄັບໃຫ້ປະຕິ ບັຕມາ ແຕ່ສມັຍເສັຽສົ້ງຄາມແກ່ໄທຍ໌. ຂະບວນກຸ້ຊາຕ ຄນະນີ້ ບໍ່ໄດຣັບການອ້ມຊູໃດໆ ຈາກພາຍ ນອກ ຈົ່ງຖືກທາງການໄທຍ໌ ຈັບກມໄປດັບສນຍ໌ຈົນຫມົດ.

ການຕ່ໍສ້ກັບໄທຍ໌ ເພ່ືອເອກຣາຊ ຂອງລາວອີສານ ນັ້ນ ໄດ້ມາສ້ິນສຸດລົ້ງໃນສມັຍຕຽງ ສິຣິຂັນທ໌, ທອງອິນທ໌ ງາວເຮືອງ ແລະທອງເປວ ໃນປີ 1949 ນ່ຳມານີ້ເອງ ແລະຕ່ໍມາ ຈົ່ງມາຣອດ ນາຍຄອງ ຈັນດາວົ້ງສ໌ ແລະທົນ ພຸຣິທັຕ ໃນສມັຍສຣິທ ທະນະຣັຕ ເຮືອງອ່ຳນາຈ. ພວກເຫລ່ົານ້ີ ລວ້ນແຕ່ ແມ່ນພວກຊາຕນິຍົມລາວອີສານ ທ້ັງຫມົດ ຕາຍຢ່າງຫນ້າສັງເວຊ ໂດຍສະເພາະຕຽງ ສິຣິຂັນທ໌, ທອງອິນທ໌ ແລະທອງເປວ.ຖວ້ນ ອຸດົລ ທີ່ເປັນແຮງເສຣີໄທຍ໌ (1) ນ່ຳພາລາວອີສານຕ່ໍສ ສ້ງໃຫ້ ມີຄວາມເຊ່ືອຖືທາງການເມືອງ ແກ່ປະເທສໄທຍ໌ ຢ່າງສົມກຽຕ ໃນສມັຍສົ້ງຄາມໂລກຄ້ັງທ ີ 2 ໃນທ ີ່ ສຸດ ກ່ໍໄດ້ຣັບສ່ິງຕອບແທນ ຄ ືການຖ ືກທ ່ຳຣ ້ຍ.

ແລະເວລານ ັ້ນ ຣະຫວ ່ າງປ ີ 1946 ເ ມ ື ່ ອລ າວອ ີ ສ ານ ຊ ່ ວ ຍໄທຍ ໌ ຣ ຽ ບຣ ້ ອ ຍແ ລ ້ ວ ຄ ັ ນ ເ ສ ັ ດ ສ ົ ້ ງ ສ ົ ້ ງ ຄ ວ ນ ໂ ລ ກ ຄ ັ ້ ງ ທ ີ 2 ແ ລ ້ ວ ກ ່ ຳ ລ ັ ງ ກ ້ ຸ ຊ າ ຕ ລ າ ວ ຂ ອ ງ ພ ຣ ະ ຍ າ ຄ ່ ຳ ມ ້ ວ ວ ິ ໄ ລ ແ ລ ະ ພ ຣ ະ ຍ າ ອ ຸ ນ ຊ ນ ະ ນ ິ ກ ອ ນ ຢ ຸ ່ ແ ຂ ວ ງ ສ າ ກ ົ ນ ນ ະ ຄ ອ ຣ ກ ່ ໍ ຖ ິ ກ ທ າ ງ ກ ານ ໄ ທ ຍ ໌ ສ ັ ່ ງ ປ ິ ດ ແ ລ ະ ຍ ຶ ດ ອ າ ວ ຸ ທ ໂ ດ ຍ ສ ິ ້ ນ ເ ຊ ິ ່ ງ .

(1) ธ.สาสตราจารย์ พลตรีหม่อมราชวงศ์ สุขุมพันธุ์ บริพัตร จากประวัติสาสตร์ไทย์สมัยใหม่ เล่ม 1 ปี 2535 หน้า 115

(2) ອານາຈັກຣ໌ລາວ ຍຸຄໂບຮານ

ກ່ອນກຳເນີດ ຂອງປະເທສລ້ານຊ້າງ

****

ອານາຈັກຣ໌ລາວໂບຮານ ທີ່ນາກ່ອນລ້ານຊ້າງນັ້ນ ມີ 3 ຍຸຄສມັຍດ້ວຍກັນ ທີ່ມີບັນທຶກໄວ້ ຄື (1) ຍຸຄອ້າຍລາວ (2) ຍຸຄອານາຈັກຣ໌ແຖນຟ້າ ຫລື ອານາຈັກຣ໌ເຖິ່ນ ແລະ (3) ຍຸຄອານາຈັກຣ໌ຫນອງແສ ນ່ຳແສ ຫລືນ່ານເຈົ້າ

ທ້ານີ້ ໂດຍມີບັນທຶກຢູ່ໃນພົງສາວະດານຈີນ ສມັຍໂບຮານ, ນີ້ແມ່ນ ໄດ້ອີ່ງໃສ່ບັນທຶກ ຄົ້ນຫລັງແຕ່ 2154 ປີ ກ່ອນພຸທທະສັກຣາຊ ຂອງນັກປະວັຕິສາສຕຣ໌ຈີນ ຄືທ່ານຊື່ມາຊຽນ ສມັຍຣາຊວົງສ໌ຮັ່ນ(393–457) ໂດຍແມ່ນທ່ານສາສຕຣາຈານຍ໌ຂົງຈື ຣິບໂຮມໄວ້ຕື່ມອີກ ແລະບັນທຶກ ໄດ້ກ່າວເຖິງການພົວພັນທ໌ຊີວິຕກັບຊົນຊາຕອ້າຍລາວ ໂດຍຣະບຸຊື່ ອອກມາ ເປັນຄັ້ງເປັນຄາວ ແລະບາງທີ ກ່ໍພົວພັນທ໌ເຫຕການ ຢ່າງໃກ້ຊິດ ແລະ ຢ່າງສົບເນື່ອງ ເວລາກັນ ກ່ໍມີ.(1)

(ກ) ອານາຈັກຣ໌ອ້າຍລາວ

****

ໂດຍການຄົ້ນຄວ້າ ແລະສຶກສາວິຈັຍ ຂອງນັກປຣາຊຍ໌ ຫລາຍສາຂາ ໃນທົ່ວໂລກ ເຊັ່ນນັກ ໂບຮານຄະດີ ນັກມະນຸສຊາຕວິທຍາ ນັກສັງຄົມວິທຍາ ແລະອື່ນໆ ພາໃຫ້ເຂົ້າໃຈຄວາມເປັນມາ ຂອງມະນຸສຊາຕ ໃນດິນແດນເຂຕເອເຊັຽຕາວັນອອກສຽງໃຕ້ ແລະ ໃນທົ່ວເຂຕແດນຈີນ ແລະພາ ໃຫ້ພວກເຮົາ ໄດ້ຫລັກຖານຄັກແນ່ ວ່າ...

ສມັຍອະດີຕຍາວນານນາຫລາຍແລ້ວ ບ່ຕ່ຳກວ່າ 40,000 ປີ ທີ່ພົບໄດ້ວ່າ ບັຣພະບຸຣຸສ ຂອງ ຊົນຊາຕຕ່າງໆ ໃນເຂຕແດນເອເຊັຽຕາວັນອອກສຽງໃຕ້ ໄດ້ມີການພົວພັນທ໌ຊີວິຕ ຢູ່ໃນໂຂງເຂຕ ດິນແດນຕ່າງໆເຫລ່ານີ້:

ພວກຊຸມຊົນເຫລ່ານີ້ ພາກັນໃຊ້ຊີວິຕ ດ້ວຍການຫາເຊິດເມື້ອ ຈັບສັຕ ແລະຊອກສແວງຫາ

---

(1) ລິກລິຕ ຮຸນຕະກຸລ, " ປະວັຕິສາສຕຣ໌ຄວາມສັມພັນທ໌ ຣະຫວ່າງຊົນຊາຕຈີນ ກັບຊົນຊາຕໄທຍ " 2509 ຫນ້າ 8 ແລະທີ່ອ້າງເຖິງຫນັງສື ໃນຊື່ວ່າ **La province du Yunnan by G.Gordier page 532**

ອາຫານ ຢູ່ຕາມຫ້ວຍຮ່ອງ ໜອງບຶງ ແລະຕາມປ່າດົງພົງເຂົາ ໃຊ້ເຄື່ອງມືຫລາຍຊນິດ ທີ່ເຮັດດ້ວຍໄມ້ ຫລືໄມ້ໄຜ່ ເຊັ່ນທີ່ຍັງຄົງນິຍົມໃຊ້ກັນຢູ່ ໃນດິນແດນເຂຕເອເຊັຽຕາເວັນອກສຽງໃຕ້ ຈີນມາ ໃນຍຸຄປັຈຈຸບັນ ດັ່ງທີ່ເຮົາເຫັນຢູ່ແລ້ວ ກໍ່ຄື ໜ້າໄມ້, ຫ່າວ,ກະຕ່ຳ, ເຫລັກແຫລມ, ກັບໃສ່ໜູ, ແຮ້ວຈັບນົກ, ຊິ່ງຈັບກະຕ່າຍ,ກະສອນ,ກະໂຊ້, ສະນາງ,ແຫຈັບປາ, ແລະຕາໜ່າງຈັບກວາງ ເປັນຕົ້ນ ເຊິ່ງໃນຊີວິຕທັມມະຊາຕ ຂອງຄົນລາວ ແລະຊົນຊາຕຕ່າງໆ ໃນບໍຣິເວນເອເຊັຽ ຍັງເຄີຍໃຊ້ກັນທົ່ວໄປ.

ແຕ່ ຄັນເມື່ອປະມານ 10,000 ປີ ເຖິງ 20,000 ປີ ຜ່ານມານີ້ ພວກກຸ່ມຊົນເຫລົ່ານີ້ ຈຶ່ງພາກັຕມີຄວາມຈະເຣີນກ້າວໜ້າຕື່ມຂຶ້ນ ຄືຮູ້ຈັກເພາะປຸກເປັນຫລັກແຫລ່ງ ມີການປຸກເຂົ້າກິນ ປຸກໜາກຖົ່ວ ແລະຮູ້ຈັກຈັບສັຕມາລຽ້ງ ໄວ້ໃຊ້ງານ ຫລື ລຽ້ງໄວ້ກິນ ເຊັ່ນ ມີການລຽ້ງໄກ່ ລຽ້ງເປັດ ລຽ້ງໜູ ແລະງົວຄວາຍ ເປັນຕົ້ນ ແລະຕໍ່ມາ ເມື່ອປະມານ 10,000 ປີ ນ່ຳມາ ພວກຂາເຈົ້າ ຈຶ່ງເກີດການຂຍາຍຕົວທາງສັງຄົມ ຈຶ່ງແຍກຕົວກັນອອກເປັນກຸ່ມ ເປັນພວກ ແລະເປັນໜ່ວ ເປັນຈຸ ຂຶ້ນມາ ເລີຍພາໃຫ້ພວກຂາເຈົ້າ ປຽ່ນແປງຊີວິຕຂອງຕົນ ອອກມາເປັນຊົນຊາຕ ເກີດມີພາສາ ແລະວັທທະນະທັມ ແຕກຕ່າງກັນອອກໄປ ຕາມລຳດັບມາ (1)

ກຳເນີດຄວາມເປັນມາ ຂອງຊົນຊາຕລາວ ອີງໃສ່ການຄົ້ນຄວ້າຂອງຊາວຕ່າງປະເທສຫລາຍທ່ານ ແຈ້ງໃຫ້ພວກເຮົາຊາບວ່າ ປະມານ 3500 ປີ ກ່ອນພຸທທະສັກຣາຊ ຫລືປະມານ 6000 ປີ ຜ່ານມາແລ້ວ ຊົນຊາຕລາວ ຕັ້ງຊີວິຕກຳເນີດ ຢູ່ທີ່ແຖບພູອັລໄຕ (**Altai Mountain**) ໃນປະເທສມົງໂກເລັຽ ປັຈຈຸບັນ.

ຄັນຕໍ່ມາ ຈາກການພົວພັນທ໌ເຫຕການທ໌ທ້າຫລາຍ ຣະຫວ່າງຊົນຊາຕຕ່າງໆໃນຍຸຄປະຖົມໂບຣານ ພາໃຫ້ພວກເຮົາ ພົບຂໍ້ມູລກ່ຽວກັບການຜາກົຕຕົວ ທາງປະວັຕິສາສຕຣ ຂອງຊົນຊາຕລາວ ດັ່ງຕໍ່ໄປນີ້ ຕາມລຳດັບ ຄື:

ອານາຈັກຣອາຍລາວ ຕັ້ງຢູ່ຕາມລຸ່ມແມ່ນ້ຳຫວາງໂຫ (ແມ່ນ້ຳເຫລືອງ **Yellow River**) ແລະແມ່ນ້ຳແຍງຊີກຽງ (**Yang Tse Kiang**) ຢູ່ໃນເຂຕພາຄກາງຂອງປະເທສຈີນ ປັຈຈຸບັນ.ແລະໃນຣະຫວ່າງ ປີ 2800 ກ່ອນພຸທທະກາລ (ກ່ອນ ພ.ສ.) ນັ້ນ ປະວັຕິສາສຕຣ໌ບັນທຶກວ່າ ຖານະການດຳຣົງຄວາມເປັນຊາຕ ຂອງລາວ ມີຄວາມໝັ້ນຄົງຖາວອຣ ແລະມີຄວາມເປັນຢູ່ຈະເຣີນກ້າວໜ້າຕາມຍຸຄສມັຍ ກ່ອນທີ່ຊົນຊາຕຈີນ ຈະຫຽ້ບຍ້າຍຖອຍລົງມາ ຈາກເຂຕພາຄເໜືອບໍຣິເວນທະເລສາບແຄສບຽນ (**Caspian Sea**) ແລະມາໄດ້ພົບກັບຊົນຊາຕລາວ ໃນທ້ອງຖິ່ນນີ້ ຕາມພາຍຫລັງ.

(1) ເດວິດ ເຄ.ໄວແອດ (**David K.Wyatt**) ໃນໜັງສ **Thailand, A short story, Ithaca N.Y 1983** ໜ້າ 3

ເວລາເກີນກວ່າ 800 ປີ ທີ່ຊົນຊາຕລາວ ດຳຣົງຊີວິຕຢູ່ ໃນຄວາມສງົບ ໂດຍບໍ່ຖືກລົບກວນຈາກ ຊາຕອື່ນໆ ນັບແຕ່ເວລາທີ່ໄດ້ຜາກົຕຂຶ້ນ ໃນປະວັຕິສາສຕຣ ຄັ້ງແຣກ.

ຈົນເຖິງປະມານ 1366 ກ່ອນ ຄ.ສ. (ຫລື 1928 ກ່ອນ ພ.ສ.) ຊົນຊາຕລາວ ຈຶ່ງຖືກແຊກແຊງ ຈາກຈີນ ເປັນຄັ້ງທຳອິດ ໂດຍນັກປະວັຕິສາສຕຣ໌ຫລາຍທ່ານ ຢັ້ງຢືນວ່າ ໃນສມັຍຣາຊວົງສ໌ເຮັຽ (**Hsia Dynasty**) ຄົງຈະແມ່ນໃນສມັຍຂອງພຣະເຈົ້າຈົງຄັ ຄືຣະຫວ່າງປີ 1427–1349 ກ່ອນຄຣິສ ຕະສັກຣາຊ ເຊິ່ງເປັນເຊື້ອວົງສ໌ແລະລູກຫລານຂອງພຣະເຈົ້າສຽວເຫົ່າ(ພຣະເຈົ້າເຫົ່ານ້ອຍ) ທີ່ໄດ້ ຈັດສົ່ງເຊື້ອພຣະວົງສ໌ຈີນ ມາຈັດການປົກຄອງແລະຄວບຄຸມລາວ. ຕາມຄວາມເປັນໄປ ເວລານັ້ນ ເຂົ້າໃຈວ່າ ແມ່ນມາໃນແບບສັນຕິ ຄື ຖືວ່າຕົນມາຊ່ວຍເສີມສ້າງຖານະ ແລະສນັບສນຸນອ້າຍລາວ (ແບບຊ່ວຍເຫລືອເຊິ່ງກັນແລະກັນ) ແທ້ຈິງແລ້ວ ແມ່ນມາແຊກແຊງກິຈຈະການພາຍໃນ ຂອງ ລາວ ໃນແບບເພື່ອນບ້ານໃກ້ຄຽງ ເຊິ່ງລາວເອງ ກ່ໍບ່ມີຄວາມລ້ຳກຽດ ແລະດັ່ງນັ້ນ ຈີນ ຈຶ່ງອາສັຍ ຄວາມເປັນມິຕ ດັ່ງກ່າວ ກ່ໍດຳເນີນແຜນໃນການຄວບຄຸມຊົນຊາຕອ້າຍລາວ ໄປໃນຕົວ (1)

ນັກຄົ້ນຄວ້າປະວັຕິສາສຕຣ ອີງໃສ່ຫລັກຖານຈາກຈີນ ພະມ້າ ທິເບຕ ວຽດນາມ ແລະຊົນເຜົ່າ ຕ່າງໆ ທີ່ອາສັຍຢູ່ໃນປະເທສຈີນ ປັຈຈຸບັນ ກ່າວໄວ້ວ່າ ຣະຫວ່າງປີ 2800 ກ່ອນພຸທທະສັກຣາຊ ຄື ເມື່ອ 4300 ກວ່າປີ ມາແລ້ວ ຊົນຊາຕອ້າຍລາວ ມີການຕັ້ງຖິ່ນຫນັ້ນຄົງ ນາກ່ອນຈີນ ມີການທຳມາ ຫາລຽງຊີພເປັນຫລັກ ດ້ວຍອາຊີພການປູກຝັ່ງ ແລະການລຽ້ງສັຕ ນອກຈາກນີ້ ຍັງຮູ້ຈັກການຕ່ຳ ຫູກ ແລະລຽ້ງມອ້ນ ແລະຕ່ຳຜ້າໄຫມ ນາກ່ອນ ຈົນເມື່ອ 1000 ກວ່າປີ ພາຍຫລັງ ຢູ່ທີ່ບ່ຣິເວນແມ່ ນ້ຳຫວ່າງໂຫ ແລະແຍງຈີ້ກຽງ ຊົນຊາຕຈີນ ຈຶ່ງໄດ້ມາພົບກັບອ້າຍລາວ ແລະເວລານີ້ ຈີນເອີ້ນຊື່ ລາວ ວ່າ "ນຸ່ງ" ອາຈຫມາຍຄວາມວ່າ ພວກທີ່ຕັ້ງຖິ່ນຖານຢູ່ຕາມລຸ່ມແມ່ນ້ຳ ສອງສາຍນີ້ ມີຖານະ ສັງຄົມ ເປັນບ້ານເປັນເມືອງຖ່ວນອຣ ແລ້ວ ນັ້ນເອງ ແລະ ກ່ໍອາຈແມ່ນຄົນພວກນີ້ ເອງ ທີ່ປະກາສ ຕົນເອງເປັນຄົນເມືອງຫລື "ນຸ່ງ" ນັ້ນເອງ. ນັກປະວັຕິສາສຕຣ໌ບາງທ່ານ ຍັງກ່າວຢັ້ງຢືນວ່າ ຊື່ທີ່ ເອີ້ນກັນ "ນຸ່ງ" ນັ້ນ ເປັນຊື່ທີ່ໃຊ້ຄູ່ກັບ "ອ້າຍຫລາວ" ຫລືອ້າຍລາວ .

ທ່ານເດວິດ ເຄ.ໄວແອດ ຂຽນໃນປະວັຕິສາສຕຣ໌ຕອນນຶ່ງ ກ່າວ (2) ບັຣຍາຍຖານະການດຳ ຣົງເຊື້ອຊາຕ ແລະການປົກຄອງ ຂອງຊົນຊາຕອ້າຍລາວ ຫລືພວກໄຕ ສມັຍອານາຈັກຣ໌ອ້າຍລາວ ໂດຍກ່າວວ່າ..." ໃນສມັຍດຶກດຳບັຣພ໌ ອະດີຕໄກມາແລ້ວ ຊົນຊາຕຈີນ ໃນບັນທຶກຕ່າງໆ ທີ່ໄດ້ກ່າວ ອ້າງເຖິງລາວ ນັ້ນ ບ່ເຄີຍມີຕອນໃດ ທີ່ກ່າວອ້າງເຖິງຄົນພວກນີ້ ວ່າ *ໄດ້ຕັ້ງຖິ່ນຖານ ຢູ່ເທິງພູດອຍ ຫລື ຕັ້ງພຸມລຳເນົາ ຢູ່ໃນປ່າຣົກດົງຫນາ ຈັກບອ່ນເລີຍ ເຖິງແມ່ນຈີນ ຈະກ່າວເຖິງ ໃນນາມດຸນຶ່ນ*

---

(1) ລຶກອິຕ ຣຸນຕະກຸລ ປະວັຕິສາສຕຣ໌ຄວາມສັມພັນທ໌ ຣະຫ່ວ່າງຊົນຊາຕຈີນ ແລະຊົນຊາຕໄທຍ ປີ 2509 ຫນ້າ 24

(2) ເດວິດ ເຄ.ໄວແອດ (**David K. Wyatt)** ຈາກຫນັງສື **Thailand, A short Story N.Y 1983 page 5**

ປານໃດກໍ່ຕາມ (ຈີນ ກໍ່ບໍ່ແຕກຕ່າງກັບພວກອິນເດັ່ງ ທີ່ຍົກຍ້ອງຕົນເອງ ເປັນພວກ "ອະຣິຍະ" ແປ ວ່າ ພວກປະເສີຕ ປະນາມພວກຊົນຊາຕ ດຣາວິດຽນ ເປັນພວກມີລັກຂະ ແປວ່າ ຄົນເຖື່ອນ) ແຕ່ ຈີນ ກໍ່ໄດ້ກ່າວອ້າງເຖິງຊື່ຄົນລາວ ໃນການດຳຣົງຊີວິຕຂອງຕົນ ຢູ່ຕາມລຸ່ມແມ່ນ້ຳສາຍຕ່າງໆແລະ ຄວາມຫມາຍນີ້ ສແດງໃຫ້ເຫັນວ່າ ຊົນຊາຕລາວເວລານັ້ນ ເປັນພວກຕັ້ງຖິ່ນຖານ ຖາວອຣແລ້ວ ເພາະອາສັຍການເພາະປູກ ເປັນຫລັກແຫລ່ງ ມີອາຊີພຫມັ້ນຄົງ ເພາະຄົນທີ່ມີອາຊີພກະສິກັມ ມັກ ຈະຢູ່ປະຈຳທີ່ ພົ້ນຈາກຊີວິຕແບບຊັດເຊພະເມຈອຣ ແບບຂ້າຕອງເຫລືອງ ຄືກັບພວກຈີນ ທີ່ເປັນ ຢູ່ໃນສມັຍດຽວກັນ.

ສະນັ້ນ ການທີ່ຈະເຊື່ອວ່າ ຊົນຊາຕອ້າຍລາວ ມີຄວາມຈະເຣີນມາກ່ອນຈີນ ຫລືມີຖານະເປັນຄົນ ເມືອງ ເຊິ່ງຈີນຍອມຮັບວ່າ ເປັນ "ນຸງ" ຫລື "ຄົນເມືອງ" ຈຶ່ງບໍ່ອາຈເປັນທີ່ສົງສັຍ ແລະທ່ານເດວິດ ເຄ.ໄວແອດ ຍັງກ່າວຕື່ມວ່າ ຊົນຊາຕລາວ ມີຖານະຄອບຄົວ ປຸກເຮືອນເປັນຫລັງ "ແບບຍົກພື້ນ" ຄືກັບທີ່ພາກິຕຢູ່ ໃນປັຈຈຸບັນ ຫມາຍຄວາມວ່າ "ເຮືອນມີຮ້ານ ກ້ວາມມີເສົາ" ນັ້ນເອງ.

ຕອນຢູ່ໃນດິນແດນລຸ່ມແມ່ນ້ຳຫວາງໂຫ ແລະແມ່ນ້ຳແຍງຈ໊ຽງ ຕອນນີ້ ຊົນຊາຕອ້າຍລາວ ຕັ້ງຕົນມີອານາຈັກຣ໌ຫມັ້ນຄົງ ເຊິ່ງມີນະຄອຣຫລວງ ຂອງຕົນ ຢູ່ 3 ຫົວເມືອງໃຫ່ຽ ຄື:

(1) ນະຄອຣລຸງ ຕັ້ງຢູ່ໃນຕອນຕົ້ນ ຂອງແມ່ນ້ຳຫວາງໂຫ, ຢູ່ທາງດ້ານເຫນືອບໍ່ນຝັ່ງ ຕາວັນອອກ ຂອງທະເລສາບຊົ່ງຣາຍ ໃນມົທົນກັນຊູ.ດິນແດນໄຊຍ໋ງ ທີ່ຈີນເອີ້ ວ່າ ເມືອງລຸງຈິວ (ລຸງເຈົ້າ ຫລື ນະຄອຣລວງ ຫລື ເມືອງນາຄ)

(2) ນະຄອຣປາ ຕັ້ງຢູ່ຕອນໃຕ້ ຂອງແມ່ນ້ຳຫວາງໂຫ ແລະຢູ່ເຫນືອນົມທົນເສສວນ ຣະຫວ່າງແມ່ນ້ຳແຍງຈ໊ຽງ ກັບແມ່ນ້ຳເກ໋ຽລຸ ຫລືເກ໋ຽຫລ໋ຽ ຫລືເກ໋ຽລວງ (ພຣະຍານາຄ ທ້າ 8) ປັຈຈຸບັນນີ້ ເອີ້ນວ່າເມືອງຈຸງກິ.

(3) ນະຄອຣງ໋ວ ຕັ້ງຢູ່ຕອນກາງ ຂອງແມ່ນ້ຳແຍງຈ໊ຽງ ມີອານາເຂຕຕໍ່ລົງມາທາງ ນົມທົນຮູເປ ແລະອັນຮຸຍ ຂອງຈີນ ໃນປັຈຈຸບັນ (ນະອຄຣງ໋ວ ນະຄອຣເງືອກ)

ນະຄອຣງ໋ວນີ້ ກ່າວກັນວ່າ ຕັ້ງຂຶ້ນຫລັງຈາກນະຄອຣລຸງ ແລະນະຄອຣປາ ເສັ່ຽໃຫ້ແກ່ ຈີນໄປແລ້ວ ໃນຣະຫວ່າງຕົ້ນພຸທທະສັກຣາຊ.

ສິ່ງທີ່ຫນ້າສັງເກຕ ກໍ່ຄື ຊື່ນະຄອຣຫລວງຂອງລາວ ນັ້ນ ມີຄວາມກ່ຽວພັນທ໌ກັບແມ່ນ້ຳຫລາຍທີ່ ສຸດ ຄື ເມືອງລວງ (ນາຄ) ເມືອງປາ ແລະເມືອງເງືອກ ຫລ໋ຽ ລວັນແຕ່ ເປັນສັຕນ້ຳ ແລະອີງໃສ່ ເຫຕຜົລທີ່ພ່ານມາ ເຮົາກໍ່ອາຈສັນນິຕຖານໄດ້ວ່າ ການທີ່ຈີນນັບຖືມ້ງກອຣ ເປັນສິ່ງສັກດ໌ສິທ ປະ ຈຳຊາຕຕົນ ແລະລາວ ພາກັນຖືນາຄ ເປັນສິ່ງສັກດ໌ສິທ ປະຈຳຊາຕນັ້ນ ຊີ້ໃຫ້ເຫັນວ່າ ຄົນທັ້ງສອງ ພວກນີ້ ມີສ່ວນພົວພັນທ໌ທາງສັງຄົມກັນມາ ໃນສມັຍອະດີຕ ແລະອາຈເປັນໄປໄດ້ອີກວ່າ ຈີນ ຍອມ

ຮັບນັບຖືນ້ອງກອຣ ເປັນສິ່ງສັກສິທປະຈຳຊາຕ ນັ້ນ ແມ່ນເອົາຕົວຢ່າງໄປຈາກລາວ ນັ້ນເອງ ເພາະ ໃນເມື່ອຊົນຊາຕລາວ ມາຕັ້ງຖິ່ນຖານ ຢູ່ໃນເຂຕລຸ່ມແມ່ນ້ຳທັ້ງ 2 ແຫ່ງນັ້ນ ກ່ອນພວກຈີນ.

ທ່ານຫມໍ ຄລິຟຕັນ ດອດ (**Clifton Dodd**) ໄດ້ຂຽນປະວັຕິສາສຕຣ ຊົນຊາຕໄຕ ກໍ່ໄດ້ໃຫ້ ຄວາມເຫັນໄວ້ວ່າ ຊົນຊາຕລາວ ໃນສມັຍອານາຈັກ່ອ້ຍລາວນີ້ ມີຄວາະເຣີມຮຸ່ງເຮືອງມາຫລາຍ ກວ່າ 4000 ປີ ກ່ອນຊົນຊາຕຢູໂຣບ ເຊິ່ງເວລາດຽວກັນນີ້ ພວກຢູໂຣບ ຍັງນຸ່ງຜ້າເປືອກໄມ້ຢູ. ສ່ວນ ຊົນຊາຕອ້ຍລາວ ນັ້ນ ໄດ້ມີການປົກຄອງເປັນປຶກແຜ່ນແຫນ້ນຫນາ ມີການພັທທະນາຊີວິຕແລະ ສ້າງຄົນກ້າວຫນ້າ ພ້ສົມຄວນ (1)

ໃນສມັຍທີ່ຊົນຊາຕອ້ຍລາວເຮົາ ໄດ້ມີຊື່ຖືກຮັບຮູ້ ເປັນຄົນເມືອງ ຫລື ນຸ່ງ ຊົນຊາຕລາວ ໄດ້ ສ້າງຊີວິຕເປັນຢູ່ ຢ່າງສັນໂດຕ (ອ່ານ ສັນໂດ=ສັນຕຸຕ) ນັກສັນຕິແລະຮ່ວມຊີວິຕຢູ່ກັນ ດ້ວຍ ຄວາມອົບອຸ່ນ ແລະມີນ້ຳໃສໃຈຈິງ ຕ່ກັນແລະກັນ ບ່ມີຜິດກັບນິສັຍຄົນລາວ ໃນປັຈຈຸບັນ ສະນັ້ນ ຈ່ງເປັນເຫຕໃຫ້ໄດ້ຮັບຄວາມເດືອດຮ້ອນ ເພາະຊາຕຈີນ ທີ່ເປັນເພື່ອນບ້ານ ໄດ້ສວຍໂອກາສເຂ້ົ້າ ມາແຊກແຊງ ຍາດແຍ່ງອາຊີພ ແລະຄວາມເປັນຢູ່ເລື້ອຍໆມາ ຈົນເຖິງຈ້ງຫວະທີ່ຈີນໄດ້ໂອກາສ ໃນການຮຸກຮານດ້ວຍກ່ຳລ້ງໃນສມັຍຫລ້ງຕ່ມາ.

ຫນ້ງສືປະວັຕິສາສຕຣ໌ຈີນ ຂຽນໂດຍທ່ານ **Demetrius Boulger** (2) ກ່າວໄວ້ວ່າ 585 ກ່ອນ ຄ.ສ.ນັ້ນ ປະເທສຈັກຣພົພຈີນ (**Chinese Empire**) ບ່ທັນໄດ້ມີເຂຕພື້ນທ່ ເປັນຂອງຕົນເອງທ່ີ່ຍ່ິນ ລ້ງມາພາຄໃຕ້ ເລີຍເຂຕແມ່ນ້ຳແຍງຊິກຽງ ເທ່ືອ, ເຂຕແມ່ນ້ຳແຍງຊິກຽງ ຍັງເປັນດິນແດນຂອງ ຊົນຊາຕ ທ່ີ່ເອ້ີ້ນວ່າ "ຄົນປ່າເຖ່ືອນ" ຢູ່ ເຊ່ິງຄົນພວກນັ້ນ ຂຍາຍຕົວຢ່ຕາມບ່ຣິເວນພາຄໃຕ້ ຢ່າງ ກວ້ງຂວ້ງ(3) ແລະໃນບັນດາຊົນຊາຕ ທ່ີ່ຖືກຈີນຂຽນບັນທຶກ ແບບດຸ່ນ ນັ້ນ ກ່ໍ່ແມ່ນຊົນຊາຕ ອ້ຍລາວ ນັ້ນເອງ ພວກນ່ຶ.

ນິສັຍໃຈຄ໋ ຂອງຄົນລາວ ເບ່ິງໂລກໃນແງ່ດີສເມ, ນິສັຍດ່ັ້ງກ່າວນ້ີ ມີສ່ວນເປັນຜົລບວກ ກ່ໍ່ຄ ໃນເມ່ືອຄົນລາວ ປະຕິບັຕ່ຕ່ຄົນຊາຕດຽວກັນ ເຊ່ິ້ງຈະຊ່ວຍ ໃຫ້ເກ່ີດ ການຢູ່ຮ່ວມກັນ ດ້ວຍຄວາມ ສງົບສັນຕ ພາຍໃນບ້ານເມ່ືອງຂອງຕົນເອງ ແຕ່ ຫາກປະຕິບັຕໄປ ໂດຍບ່ຄ່ດ ຈ່ງແນກ ເຊ່ືອຊາຕ ເຜ່ົ່າພັນທ ຄວາມເປັນມ່ຕແລະສັຕຣູຕ່ງໆແລ້ວ ກ່ໍ່ຈະພາໃຫ້ເກ່ີດຜົລລ່ບ ກາຍເປັນຈຸດອ່ອນ ຄ່ີຈະ ເປັນການໄຂປະຕູໃຫ້ຄົນຕ່ງຊາຕ ເຂ້ົ້າເຈາະນ້ງ ຫລ່ືເຂ້ົ້າແຊກແຊງກ່ິຈຈະການ ພາຍໃນ ຂອງ

---

(1) ອຸທ້ຍ ເທພສ່ທທາ ຈາກ " ຄວາມເປັນມາຂອງໄທຍ-ລາວ " ອ້ງເຖ່ິງທ່ານຫມໍ ດອດ ພ່ມພ 1916 ຫນ້າ 78-79

(2) **W.A.R Wood** ຈາກຫນ້ງສ **History of Siam** ພ່ມພ່ທ່ຊຽງໃຫມ່ 1924 ຫນ້າ 31

(3) ຫນ້ງສ່ເຣ້ືອງດຽວກັນ ແລະນ້ກຂຽນຜູ່ດຽວກັນ ທ່ີ່ອ້ງເຖ່ິງ **Demetrieus Boulger** **P. 31**

ຊາຕຕົນ ໂດຍງ່າຍດາຍ. ເພາະ ໃນເມື່ອຄົນລາວ ເປັນຄົນຊື່ ບໍ່ຄ່ອຍຈະຄຶດວ່າ ພວກຄົນຕ່າງດ້າວ ຫລືຄົນຊາຕອື່ນ ຈະຄິດໂກງ ມີເລ່ຫ໌ຫລ່ຽມ ຫລືມີມະໂຍບາຍເອົາປຽບ ແກ່ຊາຕຕົນ ຄືແນວໃດ? ສະນັ້ນ ອີງໃສ່ນິສັຍໃຈຄໍ ເຊັ່ນນີ້ ກໍ່ພາໃຫ້ຄົນຈີນ ສວຍໂອກາສ ໃຊ້ຄວາມເປັນມິຕ ແລະນິສັຍ ມັກສງົບຂອງຄົນລາວ ລ່ວງລ້ຳດິນແດນເຂົ້າມາ ໃນແບບທີ່ຮຽກວ່າ " ການຮຸກຮານແບບສັນຕິ" ຫລືໂດຍເທັກນິຄທາງການທູຕ. ຈີນໄດ້ຄ່ອຍໆອົພຍົບເຂົ້າມາອາສັຍ ຢູ່ໃນດິນແດນ ຂອງພວກຊົນ ຊາຕອ້ຍລາວ ຄື ເຂຕນະຄອຣລຸງ ນະຄອຣປາ ຫລາຍຂຶ້ນເລື້ອຍໆ ເມື່ອມີການຕຽມພ້ອ ຄືໄດ້ ຈ້ງຫວະ ກໍ່ທຳການຮຸກຮານອ້ຍລາວ ດ້ວຍກຳລັງ ໃນທີ່ສຸດ ຊົນຊາຕອ້ຍລາວ ຈ່ຳເສັຽນະຄອຣ ລຸງ ນະຄອຣປາ ໃຫ້ແກ່ຈີນ ໂດຍບໍ່ຄາດຝັນ.

ຕາມປະວັຕິສາສຕຣ ຂອງຕ່າງປະເທສ ຫລາຍສະບັບ ກ່າວໄວ້ວ່າ ຊົນຊາຕອ້ຍລາວ ໄດ້ເສັຽ ນະຄອຣລຸງ ໄປ ປະມານເວລາກ່ອນປີ ຄ.ສ. 843 ຫລືກ່ອນພຸທທະສັກຣາຊ 300 ປີ ໃນສມັຍຣາຊ ວົງສ໌ ຈິວ (**Chou Dynasty 1124- 249 B.C**) ໂດຍອີງໃສ່ເຫຕການ ທີ່ຊົນຊາຕ ຕາຣ໌ຕາ ຫລື ຊົນຊາຕມົງໂກລ (**Tarta**) ໄດ້ຍົກກຳລັງເຂົ້າຮຸກຮານ ຕ່ປະເທສຈີນ ທີ່ຕັ້ງຢູ່ບໍຣິເວນ ຕົ້ນແມ່ນ້ຳ ຫວາງໂຫ (**Hwangho or Yellow River**) ແລະແມ່ນ້ຳແຍງຊີ ທາງພາຄເຫນືອຂອງອ້ຍລາວ ເຊ່ິງເວລານັ້ນ ພວກມົງໂກລ ຫລື ຕາຣ໌ຕາ ໄດ້ຕີພວກຈີນ ແຫ ເຂົ້າມາ ຈົນຮອດດິນແດນອານາ ຈັກຣ໌ອ້ຍລາວ ໂດຍໃນເວລາຜ່ານມານີ້ ຊົນຊາຕຈີນ ກໍ່ໄດ້ມາຂໍ່ຕັ້ງຊີວິຕປະສົມປະສານ ກັບຊົນ ຊາຕລາວ ຫລາຍສົມຄວນແລ້ວ ໃນເມື່ອຈີນ ຖືກຕີແຕກ ກໍ່ພາກັນເຂົ້າມາອັ່ງອໍ ຮ່ວມຢູ່ນຳຄົນລາວ ທີ່ນະຄອຣລຸງ ສົມທົບກັບພວກຈີນທີ່ມາອາສັຍຢູ່ກ່ອນ ແລະເມື່ອນະຄອຣລຸງ ຖືກຕີແຕກໄປອີກ ຊົນ ຊາຕອ້ຍລາວ ຈ່ຳພາກັນມາໂຮມຢູ່ນະຄອຣປາ ເຊ່ິງຕັ້ງຢູ່ທິສໃຕ້ ຕ່ກັນລົງມາ ຈີນກໍ່ເລີຍສວຍໂອ ກາສ ຍຶດເອົານະຄອຣລຸງ ໄປເປັນຂອງຕົນເລີຍ ໃນເມື່ອພວກຕາຣ໌ຕາ ອ່ອນແຮງລົງ ແລະຖືກຈີນ ຕ່ສ້ໄດ້ຄືນ ໃນພາຍຫລັງ.

ຄືດັ່ງທີ່ໄດ້ກ່າວມາແລ້ວວ່າ ດ້ວຍເຫຕທີ່ຊົນຊາຕລາວ ມັກຄວາມສງົບ ເປັນທຶນຢູ່ໃນຕົວແລ້ວ ເຊ່ັນ ເປັນຄົນບໍ່ມັກຍາກ ບໍ່ມີນິສັຍ ຂີ້ຢຸຍີ ຄືກັບນິສັຍຄົນບາງຊາຕ ແລະບໍ່ມັກຮ່ຳໄຮ ຈ່ຳພາກັນ ປະຖິ້ມນະຄອຣລຸງ ໃຫ້ແກ່ຈີນ ໂດຍງ່າຍດາຍ ແລ້ວກໍ່ມາຊອກຢູ່ບ່ອນໃຫມ່ ຄືຢູ່ທີ່ນະຄອຣປາ ໂດຍ ຄຶດວ່າ ອາຈບໍ່ມີຄວາມຍາກ ຄືເມື່ອກ່ອນ ໃນຕອນນີ້ ຄົນລາວບາງສ່ວນ ກໍ່ພາກັນອົພຍົພຕ່ ແລະ ຂຍາຍຕົວລ່ວງເລີຍລົງມາ ຈົນຮອດຕອນກາງຂອງແມ່ນ້ຳແຍງຊີກຽງ ແລະຕ່ລົງມາຮອດນິນທົນ ຣູເປ ແລະ ນົນທົນອັນຣຸຍ ຂອງຈີນໃນປັຈຈຸບັນ ເລີຍຕ່ມາຮອດນົນທົນເສສວນ ໃນຕອນຫລັງ.

ຕ່ຈາກນັ້ນ ປະມານ 70 ປີ ເມື່ອມາເຖິງຣັຊສມັຍຂອງກະສັຕຣິຍ໌ຈີນ ພຣະເຈົ້າຈິ໋ນຊີ ຮ່ອງເຕ ຜູ ຕັ້ງຣາຊວົງສ໌ຈິ໋ນຣະຫວ່າງ ຄ.ສ. 296–337 ແລະປະມານປີ ຄ.ສ.300 ຊົນຊາຕຈີນ ເລີຍຖືໂອກາສ

ຍົກທັບເຂົ້າຮຸກຮານ ໂດຍກົງ ແລະພວກອ້າຍລາວ ທີ່ນະຄອຣປາ ໃນສມັຍເຈົ້າຂຸນເມືອງ ໄດ້ທ່າ ການຕ່ໍສູ້ຕ້ານການຮຸກຮານຂອງຈີນ ຢ່າງຫນັກ ສາມາຕຖ່ັ້ງຕົວຢູ່ໄດ້ຕ້ັງແຕ່ ປີ ພ.ສ.453 ຈົນເຖິງ ພ.ສ.456 (ກ່ອນ ຄ.ສ. 113 ປີ) ຈົນຈ່ຶງຍຶດເອົາອານາຈັກຣ໌ນະຄອຣປາ ອອກຈາກມື ຂອງລາວ ໄດ້ ສ່ຳເຣັດ ຈ່ຶງເຣັດໃຫ້ຊົນຊາຕອ້າຍລາວ ຕອ້ງອົພຍົພຖອຍຫນີອອກຈາກດິນແດນ ຖິ່ນຂອງຕົນເອງ ຍ້າຍລົ່ງມາທາງທິສໃຕ້ຕາມລ່ຳດັບ ຕ່ໍມາ ພວກອ້າຍລາວ ຈ່ຶງສາມາຕຖ່ັ້ງອານາຈັກຣ໌ນະຄອຣ ຈ່ຳປາ ເປັນທີ່ຢູ່ໃຫ່ມ ແລະໄດ້ທ່າການຕ່ໍສູ້ ຢ່າງຂຽວເຂັ້ນ ຕ້ານກັບການຄອບຄອງ ຂອງຈີນ ຕ່ໍໆມາ ໃນທີ່ສຸດ ກ່ໍມາເສ້ຽນະຄອຣຈ່ຳປາ ໃຫ້ແກ່ຈີນ ຈົນໄດ້.

ຍ້ອນຄວາມຈຸ້ມວາຍ ຂອງຈີນ ທີ່ພຍາຍາມຄອບຄອງ ແລະກົ້ນກົ້ນລາວ ເຊ່ັ້ນນ້ີ ພາໃຫ້ ຊົນ ຊາຕອ້າຍລາວ ຈ່ຳນວນຫລາຍ ຈ່ຶງພາກັນຖອຍລົ່ງມາ ຢ່າງບ່ໍຢຸດ ນ່ຳເອົາຊ່ືຄ່ຳວ່າ "ລາວ" ພາ ກັນເຂ້ົ້າມາອາສັຍຢູ່ໃນເຂຕ ຂອງອານາຈັກຣ໌ນອມລ໌ພຸບຸຣິ-ທະວາຣາວະດ໌ ແລະອານາຈັກຣ໌ຂອມ (ຂອມຟູນັນ ແລະຂອມເຈນລະ) ໂດຍຍ່ຶດເອົາລ່ຳແມ່ນ້ຳຂອງ ເປັນຈຸດຂຍາຍຕົວ ເປັນຂ້ັນໆມາ ໃນທີ່ສຸດ ຈ່ຶງເກ່ີດມ່ີອານາຈັກຣ໌ລາວ 2 ອານາຈັກຣ໌ ຂ້ຶ້ນໃນເຂຕນ້ີ ດ້ັ່ງທ່ີ່ຈະກ່າວໃນຂ້ັ້ງຫນ້າ.

(ຂ) ອ້າຍລາວ ຕ້ັ້ງອານາຈັກຣ໌ແຖມຟ້າ

ຄ້ັ້ງ ທ່ີ 1 ຫລ່ ິ ອານາຈັກຣ໌ເຖ່ ິ ມ.

****

ຫລ້ັງຈາກ ການສູນຍ໌ເສ້ຽເອກຣາຊແກ່ຈີນ ແຕ່ສມັຍນະຄອຣຈ່ຳປາ ເຊ່ັ້ນນ້ັ້ນ ເວລານ້ີ ການຕ່ໍສູ ຂອງຊົນຊາຕອ້າຍລາວ ຍ່ັງບ່ໍຢຸຕ ແລະຈາກຜົລຂອງສ່ົງຄາມ ທ່ີຜ່ານມາ ອານາຈັກຣ໌ອ້າຍລາວ ຖ່ືກແບ່ງອອກເປັນ 2 ພາຄ ຄ່ ື ເຂຕພາຄເຫນ່ືອເອ້ີນຊ່ ື ວ່ າ *ເມ ືອງເພ ງ ຍ* ຫລ ື ເປະຫ ງ ຍ ມ ີນ ັ ກ ຂຽນບາງທ່ານ ເອ້ີນຊ່ ື ເມ ືອງພ ໄ ຍ ກ ໍ ່ ມ ີ ແລະຢູ່ທ ງ ເຂຕພ ຄ ໃ ຕ ້ ຍ ັ ງ ເອ ີ ້ ນ ຊ ່ ื ວ ່ า *อ ้ า ยล ้ า ว* ຢ ู ่ ต ามเด ิ ม. ກ ະ ສ ัตร ิ ย ์ อ ้ า ยล ้ า ว ใ ນ ส ม ั ย น ี ้ ม ี ช ่ ื ท ่ ี ่ พ ง ก ิ ต ใ ນ พ ง ส ง ะ ด ารจ ี น ພ ร ะ ນ ามว ่ า ຂ ุ น เ ม ื อ ง .

ແລະ ເວລານ້ີ ທ້ັງສອງອານາຈັກຣ໌ ນ້ີ ຖ່ືກຈີນເອ້ີນວ່ າ ຍ ่ ี ໂ ສ ่ ວ ຫ ລ ิ ย ่ ี เ จ ้ ๊ า ค ็ ห ม า ย เ ถ ิ ง ล า ว ຖ ่ ื ก แ บ ่ ง แ ย ก ก ั น เ ป ั น "อ า ณ า จ ั ก ร ์ ส อ ง เ จ ้ า ล า ว" น ั ้ น เ อ ง .

ແລະໃນເວລາທ່ີ່ອ້າຍລາວ ຕ້ັ້ງຕົນຢູ່ເຂຕນະຄອຣເພ ງ ຍ ນ ້ ี ພ າ ໃ ຫ ้ อ ้ า ยล ้ า ว ม ี ช ่ ื ค ว บ ก ั น ว ่ า

ວ່າ"ງາຍລາວ" ກໍ່ຄື "ລາວເພງາຍ" ນັ້ນເອງ ຣວມກັບຊື່ເດີມວ່າ "ອ້າຍລາວ "ໃນທີ່ສຸດ ຈົ່ງຍັງ ເຫລືອແຕ່ຊື່ຄໍ່ວ່າ "ລາວ" .

ການແບ່ງແຍກລາວ ອອກເປັນ 2 ກຸ່ມນີ້ ໂດຍແຜນການ ຂອງຂຸນນາງນາຍທະຫານຈີນ ຜູ່ນຶ່ງ ທີ່ຊື່ວ່າ ຊອງກຽວ, ແຜນການນີ້ ແມ່ນປ້ອງກັນ ບໍ່ໃຫ້ພວກອ້າຍລາວໂຮມກໍາລັງຕໍ່ສູ້ກັບຈີນຄືນ.

ແລະໃນເວລາທີ່ຕົກເປັນເມືອງຂຶ້ນ ນັ້ນ ອ້າຍລາວທັງ 2 ອານາຈັກຣ໌ ນີ້ ພວກເຂົາ ບໍ່ຍອມຢູ່ ລ້ ຕ່າງກໍ່ພຍາຍາມຊອກຫາທາງແກ້ໄຂບັນຫາຊາຕຕົນເອງ ຕລອດມາ ແລະເພື່ອທໍ່ການຕໍ່ສູ້ ກູ້ອິສຣະພາພ ຈາກຈີນໃຫ້ສໍ່າເຣັດ. ເພື່ອຢາກໃຫ້ລາວທັງ 2 ອານາຈັກຣ໌ ຫ້ນໂຮມກັນເຂົ້າ ເປັນ ຊາຕດຽວກັນ ຄືນໃຫມ່ ພວກອ້າຍລາວ ເຖິງແມ່ນຖືກແບ່ງແຍກ ແລະຖືກຄວບຄຸມຢ່າງຫນັກປານ ໃດ ກໍ່ຕາມ ແຕ່ກໍ່ໄດ້ສ້າງແຜນການເອກພາພ ຣ່ວມກັນຂຶ້ນ ຣະຫວ່າງລາວ 2 ພາຄ ຄືປະກາສໃຊ້ *ຄໍາຂວັນປະຈໍາຊາຕ* ຂອງຕົນເອງ ເປັນຄໍາດຽວກັນຄື "ໄທລາວ"ເຊິ່ງແປວ່າ"*ລາວອິສຣະຊົນ*" ຫລື *"ລາວອິສຣະພາພ* "ນັ້ນເອງ ແລະ ເວລານັ້ນ ພວກລາວໄດ້ຕັ້ງແນວຣ່ວມປົດປ່ອຍຊາຕ ຂຶ້ນ (1) ທໍ່ການຕໍ່ສູ້ກັບຈີນຕ່ໍໆມາ, ສະນັ້ນ ຊື່ຄໍ່ວ່າ ໄທ ແຖນ ທຽນ ເຖີນ ຈົ່ງພາກົດຂຶ້ນເວລານີ້ ແລະ ພົ້ງສາວະດາຣຈີນ ໄດ້ບັນທຶກເຖິງຊື່ ອານາຈັກຣ໌ແຖນ ຫລື <u>ອານາຈັກຣ໌ເຖີນ</u> ກໍ່ໃນຕອນນີ້ເອງ.

ລາວ ເຖິງຈະຖືກແຍກກັນຢູ່ ແຕ່ກໍ່ມີຊື່ ໂດຍອຸດົມການດຽວກັນ ຄືຄໍ່ວ່າ "ລາວອິສຣະ "ຫລື ຄໍ່ວ່າ *" ໄທລາວ"* ແລະຄໍ່ໆນີ້ ໄດ້ຖືກນໍ່ໃຊ້ມາຣອດປັຈຈຸບັນ.

ນັບວ່າ ເປັນຈັ່ງໂຊຄ ທີ່ຄວາມພຍາຍາມຂອງລາວ ໄດ້ຣັບຜົລສໍ່າເຣັດອີກຄັ້ງໃຫມ່ ກໍ່ຄືໃນສມັຍ ພຣະເຈົ້າແຜ່ນດິນຈີນ ຊື່ຮົ່ນເຜ້ງຕີ ໃນ ພ.ສ.551 ຫລື ຄ.ສ.ທີ 8 ໄດ້ເກີດການຂະບົດຂຶ້ນ ໂດຍການ ກະທໍ່າຂອງອ່ອງຫມ້ ພາໃຫ້ປະເທສຈີນ ຕົກຢູ່ໃນຄວາມວຸ້ນວາຍ ອ່ອງຫມ້ ຍຶດບັນລ້ງແລະປົກ ຄອງປະເທສຈີນມາໄດ້ 14 ປີ ຈົ່ງຖືກເລົ່າຫວນ ກັບເລົ່າຊິວ ຍົກກໍ່ລ້ງເຂົ້າຍຶດນະຄອຣຫລວງຕຽ ອັນ(ເມືອງຊຽງອານ) ແລ້ວຈັບອ່ອງຫມ້ ຂ້າເສັ, ຣາຊບັນລ້ງກ໌ຈີນ ຈົ່ງມາຕົກ ແກ່ພຣະເຈົ້າ ໄຫວຢ້ງຫວາ ໃນ ຄ.ສ.12–13 (ພ.ສ. 555) ຄັນຕ່ໍມາອີກ ຍ້ອນວ່າ ພຣະເຈົ້າໄຫວຢ້ງຫວາ ເປັນ ກະສັຕຣິຍ໌ທີ່ອ່ອນແອ ເລົ່າຊິວ ຈົ່ງຍຶດຣາຊບັນລ້ງກ໌ ແລ້ວປະກາສຕົນເປັນກະສັຕຣິຍ໌ແທນ ມີພຣະ ນາມວ່າ ພຣະເຈົ້າຮົ່ນກວາງບູ. ເວລາທີ່ຈີນ ຍັງປະສົບຄວາມວຸ້ນວາຍຢູ່ນັ້ນ ຝ່າຍລາວກໍ່ຖືໂອກາສ ແຍກຕົວອອກຈາກອໍ່ານາຈຂອງຈີນ ອີກຄັ້ງນຶ່ງ.

---

(1) ຄໍາຈັນທ໌ ປະດິຕ ຈາກ "ປະວັຕິສາສຕຣ໌ການຫູຕລາວ" ໃນຫນັງສືອະນຸສອຣ໌ ສົມເດັ້ຈພຣະສັງຄະຣາຊລາວ ປີ 2528 ໜ້າ 52

ແລ້ວຫລັງຈາກນັ້ນ ພວກຈີນ ກໍ່ຖືເອົາວິທີການເຜີຍແຜ່ພຸທທະສາສນາ ເປັນເຄື່ອງມື ໃນການ ຂຍາຍອໍານາຈ ຂອງຕົນ ເວລານີ້ ພຣະເຈົ້າຣັ່ນນ່ຳຕີ ຂຶ້ນເປັນກະສັຕຣິຍ໌ຈີນ ຈຶ່ງໄດ້ຈັດສົ່ງຄນະ ທູຕນໍາເອົາພຣະພຸທທະສາສນາເຂົ້າມາຍັງລາວ ອີກຈຸດນຶ່ງ ແຕ່ ກະສັຕຣິຍ໌ອ້າຍລາວ ບໍ່ເຊື່ອໃຈໃນ ເຈຕນາຂອງຈີນ ຈຶ່ງບໍ່ຍອມຮັບຄນະທູຕນັ້ນ.ຈີນ ຈຶ່ງດໍາເນີນແຜນຮຸກຮານລາວ ໃນທັນທີ ໂດຍຍົກ ກໍາລັງທັບ ນໍາໂດຍແມ່ທັບ ຊຶ່ເຕົ້າກຸ ແລະບັນຈຸຈ ໃຫ້ຍົກເຂົ້າບຸກຕີພວກອ້າຍລາວ ທີ່ນະຄອຣເພ ງາຍ ຫລ້ວງລາວ. ສົງຄາມ ຣະຫວ່າງສອງຝ່າຍ ໄດ້ເກີດຂຶ້ນຢ່າງຮ້າຍແຮງ ໃນປີ ຄ.ສ.60, ຝ່າຍ ລາວ ນໍາໂດຍພຣະເຈົ້າຂຸນວັງເມືອງ ກໍ່ໄດ້ທໍາການຕໍ່ສູ້ກັບຈີນ ຢ່າງເຂັ້ມແຂງ ແຕ່ໃນທີ່ສຸດ ກໍ່ເສັຽ ຊັຍແກ່ຈີນອີກ ໃນປີ ຄ.ສ.69 ເພື່ອຈະຄວບຄຸມຕົວເລຂໃຫ້ເສັຽສ່ວຍ ແກ່ຈີນ ທາງການຈີນໄດ້ບັງ ຄັບໃຫ້ລາວ ສໍາຣວດ ແລະສົ່ງບັນຊີສໍາມະໂນຄົວ ໃຫ້ແກ່ຈີນ ເຊິ່ງເວລານັ້ນ ຝ່າຍລາວ ໄດ້ສົ່ງສໍາ ມະໂນ ນັບເປັນລາຍຄອບຄົວ ໄດ້ຈໍານວນທັງຫມົດ ມີ 51,800 ຄອບຄົວ ແລະນັບເປັນຕົວເລຂ ພົລ ເມືອງລາວ ເຊິ່ງຄັ້ງແຣກທີ່ຜາກົຕເຫັນ ໃນປະວັຕິສາສຕຣ໌ ກໍ່ຄືຈໍານວນ 553,711 ຄົນ ແລະ ໃນນັ້ນ ມີເຈົ້າຜປົກຄອງເຂຕແດນ ຫົວເມືອງນ້ອຍໃຫຽ່ ທັງຫມົດ ຈໍານວນ 77 ຫົວເມືອງ (1)

ນາຣອດປີ ຄ.ສ.78 ສມັຍກະສັຕຣິຍ໌ ຣັ່ນຈຽງຕີ ຊົນຊາຕອ້າຍລາວ ໄດ້ພາກັນລຸກຂຶ້ນກູ້ຊາຕອີກ ຄັ້ງນຶ່ງ ໂດຍການນໍາ ຂອງພຣະເຈົ້າຂຸນໄລລາວ ຫລື ຂຸນໄຫລລາວ ຫລານພຣະເຈົ້າຂຸນວັງເມືອງ. ໃນທີ່ສຸດ ພຣະເຈົ້າຂຸນໄຫລລາວ (ຂຸນໄລ ຫລືຂຸນໄຫລ ຫລືຫລາຍ)ໄດ້ສຽ້ງພຣະຊົນມ໌ຊີພໃນສນາມ ຣົບ ອານາຈັກຣ໌ແຖມຟ້າ ຈຶ່ງຕົກເປັນເມືອງຂຶ້ນຂອງຈີນ ແລະຈາກນັ້ນມາ ກໍ່ສລາຍຕົວລົງ.

ເວລານີ້ ເພື່ອທໍາລາຍພື້ນຖານການປົກຄອງລາວ ໃຫ້ສລາຍໄປທັງຫມົດ ຈີນໄດ້ບັງຄັບໃຫ້ປຽ່ນ ຊື່ເມືອງຫລວງຂອງລາວ ຈາກຊື່ເດີມ ຄືເມືອງ "ປຸດອຸຍ" ມາເປັນເມືອງ "ຍົງຊຽງ" ຫລື ເອ້ງຊຽງ ຍົງຊຽງ ກໍ່ຄື "ເມືອງຍົງ" ນັ້ນເອງ. ການປຽ່ນແປງຊື່ເມືອງຫລວງ ຂອງລາວ ຈາກຊື່ເດີມນັ້ນ ແມ່ນ ນະໂຍບາຍຈີນ ໃນການສ້າງພາພພົຈນ໌ທາງການເມືອງ ໃຫ້ຄົນລາວຕົກຢູ່ໃຕ້ອິທທິພົລຈີນ ໃນທາງ ຣູບທັນແລະນາມະທັນ ໄປພ້ອມກັນ ເຊິ່ງນະໂຍບາຍແບບດຽວກັນນີ້ ທີ່ໄທຍ໌ ນໍາເອົາມາໃຊ້ປະຕິບັຕ ຕໍ່ລາວ ນັບແຕ່ສມັຍຣັຊການທີ 2 ເຖິງຣັຊການທີ 6 ແລະ 7 ໂດຍນໍາເອົາຊື່ເມືອງ ຂອງລາວ ທີ່ມີຢູ່ ມາປຽ່ນແປງໄປ ຕາມຄວາມຕ້ອງການຂອງໄທຍ໌ ຄື ໃຫ້ມີຊື່ເປັນໄທຍ໌ ໂດຍກົງ.

ເປັນທີ່ຮູ້ກັນດີວ່າ ການສູນຍ໌ເສັຽອານາຈັກຣ໌ແຖມຟ້າ ຄັ້ງນີ້ ພາໃຫ້ລາວ ແບ່ງກຸ່ມແບ່ງພວກ ກະແຈກກະຈາຍກັນໄປຫລາຍກຸ່ມ ຖືເອົາສາຍແມ່ນ້ຳ ເປັນບ່ອນຕັ້ງຖິ່ນຖານ ຈຶ່ງກາຍເກີດມີອານາ ຈັກຣ໌ຕ່າງໆ ຄື:

(1) ຕິດຕາມສາຍແມ່ນ້ຳຂອງ ເກີດມີອານາຈັກຣ໌ ລາວລ້ານນາ ແລະລາວລ້ານຊ້າງ

(1) W.A.R Wood, History of Siam, June 30th Chiangmai 1924 Page 32

(2) ຕິດຕາມສາຍແມ່ນ້ຳສວຍລິ ຫລືສາລະວິນ ເກີດອານາຈັກຣ໌ ສິບເກົ້າເຈົ້າຟ້າ ຫລື ອານາຈັກຣໂກສັມພີ ຫລື ເກົ້າຊັມປະຍີ ແລະອານາຈັກຣ໌ແສນຫວີ.

(3) ລົງໄປທາງທິສໃຕ້ ເຂົ້າສູ່ແມ່ນ້ຳພຣຫົມບຸຕ ຢູ່ອິນເດັຽ ຈົ່ງເກີດອານາຈັກຣ໌ມະນີປຸຣະ ຫລືເວສາລີຫລວງ ຂອງພວກອັດສັມ ຫລື ລາວອາຫົມ (ໄຕຂັນຕີ ຫລື ຄ່ຳທີ)

(4) ຕິດຕາມສາຍແມ່ນ້ຳແດງ ແມ່ນ້ຳດຳ ໄປທາງຕາວັນອອກ ກໍ່ເກີດອານາຈັກຣ໌ຈລະນີ ພຣຫົມທັຕ ໃນບໍຣິເວນຍ່າວຈີ(ອາມາມ) ເຂຕໄລ່ເຈົ້າ ລາວກາຍ ແລະເມືອງແຖ .

ຈາກສາຍແມ່ນ້ຳຂອງນີ້ (ຈີນ ເອີ້ນແມ່ນ້ຳລ້ານຊ້າງ) ພວກອ້າຍລາວ ໄດ້ຂຍາຍຕົວ ຕໍ່ລົງໄປອີກ ຈົນຮອດແມ່ນ້ຳເຈົ້າພຣະຍາ. ສຳຣັບສາຍແມ່ນ້ຳເຈົ້າພຣະຍານັ້ນ ຈົນຮອດເມືອງສຸພັນບຸຣີ (ສອງພັນບຸຣີ) ຮອດນະຄອຣສຣີທັມມະຣາຊ ແລ້ວຕໍ່ມາຄົນພວກດ້ັ້ງກ່າວ ຈົ່ງຖືກກືນຜະສົມ ກັບ ຊົນຊາຕມອນ ທະວາຣາວະດີ ແລະລົພບຸຣີ ກາຍເປັນ ຊົນຊາຕສຍາມໄປ.

ຕາມລາຍງານປະວັຕິສາສຕຣ ຂຽນໂດຍທ່ານ **D.G.E Hall** ໃນຫນັງສື ຊຶ່ **A History of Southeast Asia** ໄດ້ກ່າວເຖິງຊົນຊາຕອ້າຍລາວ ທີ່ພາກັຕຊື່ມາກ່ອນຄ່ຳວ່າ "ໄທ" ໃນຕອນນັ້ນ ກ່າວໄວ້ດັ່ງນີ້:

From that time onwards Chinese records make freguent references to them as the "barbarians " south of Yang tse Kiang . They under Chinese suzerainty early in the Christian era, but made many attempts to assert their Independence.

In order to escape subjection to China, many of them emigrated to the region now occupied by the Northern Shan State of Burma. There the Chinese knew them as the Ai-Lao.

ຈາກເວລານັ້ນ ເປັນຕົ້ນມາ ພວກເຂົາໄດ້ພາກັຕຊື່ ໃນພົ້ງສາວະດານຂອງຈີນຫລາຍໆເທື່ອ ໂດຍຈີນ ມັກ ກ່າວເຖິງໃນແບບດູຖ່ືນວ່າ *"ຊົນຊາຕປ່າເຖື່ອນ" ແຫ່ງລຸ່ມແມ່ນ້ຳແຍງຈ໊ຶ້ກຽງພາຄໃຕ້"* ແລະພວກເຂົາ ຕໍ່ມາ ໃນຕົ້ນຂອງຄຣິສຕະສັກຣາຊ ກໍ່ໄດ້ຕົກຢູ່ໃຕ້ອຳນາຈ ຂອງຈີນ ແລະໄດ້ທ່ຳຄວາມພຍາຍາມ ຫລາຍໆເທື່ອ ເພື່ອຊອກຫາຄວາມເປັນເອກຣາຊ ແກ່ຕົນເອງ ແລະອີກຕໍ່ມາ ເພື່ອຈະຫລີກຫນີສະພາພ ທີ່ຖືກຈີນຄວບຄຸມ ພວກຂາເຈ້ົ້າ ກໍ່ພາກັນອົພຍົພລົ້ງມາອາສັຍ ຢູ່ໃນຫອ້ັ້ງຖ່ືນ ເອີ້ນວ່າຣັຕຖ໌ ສານ (**Shan State**) ເຊ່ົ້ງຢູ່ໃນດິນ ແດນຂອງພະມ້ົ້າ ທຸກມ້ື້ນ້ີ. ຣະຫວ່ົ້າງນ້ີ້ເອງ ຊາວຈີນ ກໍ່ເອ້ີນພວກຂາເຈ້ົ້າວ່າ "*ອ້ັ້ຍລາວ*

ຈາກບັນທ້ຶກປະວັຕິສາສາຕຣ ຂອງທ່ານ **Wood** ໃນຫນັງສືຊຶ່ **History of Siam** ເຊ່ົ້ງໃນຕອນ ຂຽນກ່ຽວກັບ "ລາວ" ທ່ີ່ກ່າວວ່າ ໄດ້ມ້ີຊ່ືພາກັຕໃນປະວັຕິສາສຕຣ ກ່ອນຊ່ືຄ່ຳວ່າ "ໄທ" ດ້ັ່ງນ້ີ:

In A.D 225, during the temporary division of China into three Empires, the T'ai were attacked by the Chinese, General Kong Beng and forced to submit to the Emporer of Szechuan. Up to this period, the T'ai were known to the Chinese by the name of Ai-Lao.

(1) D.G.E Hall, History of Southeast Asia, University of London 1969 Page 169
(2) W.A.R Wood, History of Siam, June 30th, Chianfmai 1924 Page 31-32

ໃນປີ ຄ.ສ.225 ໄລຍະເວລາທີ່ຈີນ ເກີດມີສົງຄາມ ແບ່ງແຍກກັນເອງເປັນ 3 ອານາຈັກຣ໌ (ສມັຍ ສາມກົກ) ນັ້ນ ພວກໄຕ ຖືກໂຈມຕີໂດຍກອງທັບຈີນ ນ່າໂດຍນາຍພົລຂົງເບ້ງ ແລະເວລານັ້ນ ພວກໄຕ ກໍ່ໄດ້ຖືກບັງຄັບໃຫ ຂຶ້ນຕໍ່ຈັກພັຕຣ໌ຈີນ ນົນທົນເສສວນ, ຮອດໄລຍະເວລານີ້ ພວກໄຕ ມີຊື່ທີ່ຮູ້ໄດ້ ຈາກຄົນຈີນ ວ່າ ອ້າຍລາວ.

ນັບແຕ່ກ່ອນສມັຍຕົ້ນຄຣິສຕສັກຣາຊ ມາຕາມລ່າດັບ, ຫລັງຈາກມະຄອຣລຸງ ແລະມະຄອຣປາ ເສັຽສົງຄາມ ໃຫ້ແກ່ຈີນໄປແລ້ວ ແລະຍອ້ນຖືກບັງຄັບຈັບກຸມໄປເປັນທາສ ສ້າງກໍ່າແພງເມືອງຈີນ ຂອງຈິ້ນຊີ ຮ່ອງເຕ້ ແລະໂດຍສະເພາະຍອ້ນຄວາມທາຣຸນໂຫດຮ້າຍຂອງ *ຫວັ້ງຈຽນ* ແມ່ທັບ ຂອງຈັກພັຕຣ໌ຈິ້ນຊີ, ຊົນຊາຕອ້ຍລາວຈໍ່ານວນຫລາຍ ຈິ່ງໄດ້ຖືໂອກາສ ອົພຍົພຫລົບຫນີຈາກດິນ ແດນເດີມ ລົງສູ່ພາຄໃຕ້ ຂອງຈີນ ແລະ ມີຈ່ານວນບ່ນ້ອຍ ກໍ່ຖອຍລົງມາບ່ຢຸດ ຈົນເຂົ້າມາຮອດ ເຂຕເອເຊັຽຕາວັນອອກສຽງໃຕ້ ຕາມລ່າດັບ ໄດ້ນ່າເອົາຊື່ ຄ່າວ່າ "ລາວ " ຫລື "ອ້າຍລາວ" ນີ້ ຕິດຕົວມານ່າ ໂດຍສະເພາະ ແມ່ນຍຶດເສັ້ນທາງຕາມລຸ່ມແມ່ນ້ໍາສາຍຕ່າງໆ ເປັນຫລັກ ຄື ໃນເມື່ອ ແຍກຕົນ ອອກຈາກສາຍແມ່ນ້ໍາແຍງຈ້ຶກຽງ ແລະຫວາງໂຫ ແລ້ວ ກໍ່ມາຈັບເອົາສາຍແມ່ນ້ໍາອິຣະ ວະດີແລະແມ່ນ້ໍາສາລະວິນ ໄປທາງປະເທສພະມ່າ ແລະອິນເດັຽ ເຂົ້າສູ່ລຸ່ມແມ່ນ້ໍາພຣົມບຸຕ ແລະ ໄປສູ່ທິສຕວັນອອກ ກໍ່ຍຶດເອົາສາຍແມ່ນ້ໍາແດງ ແມ່ນ້ໍາດ່າ ກາຍເປັນອານາຈັກຣ໌ຈຸລນີ (ໄລ່ເຈົ້າ)

ສ່ໍາຣັບກຸ່ມ ທີ່ຍຶດເອົາສາຍແມ່ນ້ໍາຂອງ ເປັນຈຸດຂຍາຍຕົວ ນັ້ນ ກໍ່ໄດ້ອົພຍົພລົງມາເປັນທອດໆ, ພວກນີ້ ເມື່ອງຈາກອາສັຍຄົນສ່ວນຫລາຍ ທີ່ອົພຍົພລົງມາ ແຕ່ຍຸຄຕົ້ນພຸທທະກາລ ໃນສມັຍທີ່ອາ ນາຈັກຣ໌ອ້າຍລາວ ຍັງບ່ທັນມີຊື່ "ໄທ " ຖືກນ່ໍາມາປະກອບເປັນອຸດົມການຊາຕ ຂອງຕົນເທື່ອ ແລະອ້າຍລາວພວກນີ້ ຈິ່ງຂຍາຍຕົວລົງມາ ໃນຊື່ວ່າ " ລາວ " ຕາມເດີມ ມີຢູ່ 2 ສາຍ ຄື:

(1) ລາວສາຍແມ່ນ້ໍາຂອງ *ຟາກຕາວັນອອກ* ເຂົ້າສູ່ເຂຕອິທທິພົລ ຂອມອານາຈັກຣ໌ຟູນັນ ແລະເຈນລະ (ສຣິໂຄຕບອງ) ຕ່ໍ່ມາ ຈົນມາຮອດສມັຍຂຸນລໍ ຄ.ສ. 739 (ພ.ສ.1282) ຈິ່ງສາມາຕຖ໌ ຕັ້ງອານາຈັກຣ໌ລ້ານຊ້ໍາງ ຂຶ້ນໄດ້.

(2) ລາວສາຍແມ່ນ້ໍາຂອງ *ຟາກຕາວັນຕົກ* ເຂົ້າສູ່ເຂຕອິທທິພົລ ຂອງພວກມອນ ໃນອານາ ຈັກຣ໌ທະວາຣາວະດີ-ລົພບຸຣິ ຄັນເມື່ອມາຮອດສມັຍຂຸນໄສພົງ ຈິ່ງຕັ້ງອານາຈັກຣ໌ລາວລ້ານນາ.

ອາຈມີ 2 ກຸ່ມລາວ ມາເປັນຜູ່ມາສ້າງຕັ້ງອານາຈັກຣ໌ລ້ານນາ ຄື ຈາກເຂຕໄຫໃຫ່ ອານາຈັກຣ໌ເມ໋ົາ ຂອງປູ່ເຈົ້າລາວຈົກ ມາທລັງ ຕັ້ງອານາຈັກຣ໌ຫນອງແສ 20 ກວ່າປີ ແລະ ສາຍອານາຈັກຣ໌ຫນອງແສ ຄືຂຸນໄສພົງໃນສມັຍດຽວກັນ ກັບຂຸນອ້ຍລໍ ຄ.ສ.739 (?) ທ້ັງສອງກຸ່ມ ລ້ວນມີຊື່ລາວ

ໃນຖານະທີ່ລາວລຸ່ມແມ່ນ້ຳຂອງ ກະຈາຍເປັນພົລເມືອງ ຂອງຊາຕເຈົ້າຖິ່ນມາ ຫລາຍຣ້ອຍປີ ຈົນເມື່ອສມັຍມ່ານເຈົ້າ ເສັຽເອກຣາຊ ໃຫ້ແກ່ຈີນ ໃນສມັຍຣາຊວົງສ໌ຫຽວນ ແລ້ວ ຈຶ່ງມີຄົນລາວ ກຸ່ມໃຫ່ ຕອນນີ້ ແມ່ນອ້າຍລາວ ຈາກຫນອງແສ ທີ່ມີຄວາມນິຍົມໃຊ້ຊື່ຕົນເອງ ເປັນ ແມນ ແຖມ ໄທ ແລ້ວ ພວກຂາເຈົ້າອົພຍົພມາຕອນນີ້ ຈຶ່ງມີຊື່ ວ່າ ໄຕ ອົພຍົພລົງມາຕື່ມ ແລະ ໂດຍອີງໃສ່ ອິທ ທິພົລການເມືອງ ຂອງຈີນຣາຊວົງສ໌ຫຽວນ ນັ້ນເອງ ຣວມທັງສມັຍກ່ອນໜ້ານັ້ນ ກໍ່ແມ່ນການ ຂຍາຍອ່ານາຈຂອງກະສັຕຣິຍ໌ພະມ້າ ພຣະເຈົ້າອະນຸຣຸທມະຫາຣາຊ (ຄ.ສ.1057) ທີ່ພາໃຫ້ພວກ ຂອມ ແລະມອນ ອ່ອນກຳລັງອ່ານາຈລົງ(1) ພວກອ້າຍລາວ ໃນເຂຕເອເຊັຽຕາວັນອອກສຽງໃຕ້ ຈຶ່ງສາມາຕຖ໋ັ້ງອານາຈັກຣ໌ຂອງຕົນເອງ ຂຶ້ນໄດ້ ແລະໃນຂັ້ນຕົ້ນ ເກີດມີ 2 ອານາຈັກຣ໌ລາວ ຄື:

(1) ອານາຈັກຣ໌ລາວລ້ານນາ ໂດຍມີເມືອງສຸວັນນະໂຄມຄ່າ (ຊຽງແສນເດີມ) ເປັນເມືອງ ຫລວງຕັ້ງຂຶ້ນ ໃນປີ ພ.ສ. 1180 ຫລື ຄ.ສ. 637 ແລະ

(2) ອານາຈັກຣ໌ລາວລ້ານຊ້າງ ໂດຍມີເມືອງເມືອງຊະວາ (ຫລືຊຽງດົງຊຽງທອງ) ເປັນ ເມືອງຫລວງ ຕັ້ງຂຶ້ນ ໃນປີ ພ.ສ. 1282 ຫລື ຄ.ສ. 739.

(ຄ) ອ້າຍລາວ ຕັ້ງອານາຈັກຣ໌ແຖບຟ້າ ຄັ້ງທີ 2 ທີ່ຫນອງແສ (ນ່ານເຈົ້າ)

****

ສຳຣັບພວກອ້າຍລາວ ທີ່ເປັນສ່ວນໃຫ່ຽ ເຊິ່ງຍັງດຳຣົງຊີວິຕຢູ່ ທາງພາຄໃຕ້ຂອງຈີນ ຕ່ຳມາ ກໍ່ພາກັນຕໍ່ສູ້ຕ້ານກັບອຳນາຈຂອງຈີນ ເພື່ອຄວາມເປັນເອກຣາຊ ຂອງພວກຕົນ ຫລາຍຄັ້ງຫລາຍ ຫົນ ແລະພວກອ້າຍລາວທັ້ງຫມົດ ເມື່ອທຳການຕໍ່ສູ້ກັບຈີນ ຄັ້ງໃດ ກໍ່ປະກາສຕົວເປັນ" ໄທ " ຄື ເປັນລາວອິສຣະຊົນ ຫລັງຈາກນັ້ນ ຈຶ່ງມາຣອດ ຄ.ສ. 618 ຂະບວນອິສຣະຊົນ ຫລື "ຂະບວນ ໄທ" ຈຶ່ງເກີດຂຶ້ນໃຫມ່ ໂດຍການນຳພາຂອງກະສັຕຣິຍ໌ອ້າຍລາວ ພຣະນາມວ່າ ສີນຸໂລ ມີອຳນາຈທ້ັນ ໂຣມລາວເປັນເອກພາພ ຈົນພວກຈີນ ຮັບຮູ້ອານາຈັກຣ໌ລາວ ຍົກໃຫ້ມີຊື່ສຽງເປັນ "ເຈົ້າແຫ່ງດິນ ແດນເຂຕໃຕ້" ກໍ່ ຄື ອານາຈັກຣ໌ນ່ານເຈົ້າ ນັ້ນເອງ ທີ່ເປັນສຽງຈີນ ຈາກຄຳວ່ ນ່ານຈ໋ວ.

(1) Karuna Kusalasaya , Buddhism in Thailand, Buddhist Publication Society Kandy, Ceylon 1965 P. 8

ພຣະເຈົ້າໄຊໂນວ໋ຫລ່ ຫລື ສິນຸໂລ (SI-NU-LO) ບາງທ່ານ ກ່ໜຽບສຽງໃສ່ ໃຫ້ເປັນພາສາປາລີ ວ່າ "ສີຫະນະຣະ " ກໍ່ມີ ເພາະມີສຽງໃກ້ງກັນ.

ມາຮອດເວລານີ້ ອານາຈັກຣ໋ອ້ຍລາວ ແຍກຕົວກັນກະແຈກກະຈາຍ ເປັນ 6 ຫົວເມືອງໃຫ່ຽ ເຊິ່ງມີຊື່ດັ່ງນີ້:

(1) ເມືອງຄວາຍ ຈີນອອກສຽງເປັນ ນ້ຽໄກ່ວ໋ເຈົ້າ ຫລື ນ້ຽຊຸຍເຈົ້າ
(ພາກິຕ ໃນການສວ່ຍຫລວງພຣະບາງ ທາງແຫ່ງ ເວລາກ່ວ໋ອ້ອງເຊີນເທພະເຈົ້າ ມາຟ້ງທັມ ກໍ່ໄດ້ອ້ອນ ວອນເຖິງເທພເຈົ້າ ແຫ່ງເມືອງຄວາຍ ຢູ່ສເມີ... ພູ່ຊຽນ)

(2) ເມືອງຍິດຊິກ ຈີນອອກສຽງເປັນ ຍິດຊິກເຈົ້າ ຍວດຊິເຈົ້າ ຫລິເອ້ຽແຊ

(3) ເມືອງທ່ຽງ ຈີນອອກສຽງເປັນ ເທ່ຽຍ້ມເຈົ້າ ເຕ້ຽຊັນເຈົ້າ

(4) ເມືອງແສຫລວ ຈີນອອກສຽງເປັນ ຊີຫລ້ຽເຈົ້າ ຄື
ເມືອງຫລວ ແຫ່ງຫນອງແສ

(5) ເມືອງຫລວງກຸ ຈີນອອກສຽງເປັນ ຫລ້ຽກຸເຈົ້າ. ຫລ້ຽກຽມເຈົ້າ
ຫລິລ້ນກອ ຫລິອາຈເປັນລ້ນກຸ ກໍ່ໄດ້.

(6) ເມືອງແສ ຈີນອອກສຽງເປັນ ນ້ຽແສເຈົ້າ

ການທ້ນໂຣມອານາຈັກຣ໋ອ້ຍລາວ ທ້ງ 6 ຫົວເມືອງ ກ່ອນຈະເກີດເປັນ" ນ່ານເຈົ້າ " ຢ່າງ ສົມບູຣນ໋ ນັ້ນ ເປັນຜົລງານອັນປະເສີຕ ຂອງພຣະເຈົ້າສິນຸໂລ ເຮັດໃຫ້ລາວມີເອກພາພ ແລະມີພະ ລະກ່ຳລ້ງ ໃນການຍືນຕົວເປັນຊາຕແລະມີເອກຣາຊ ເທົ້າທຽມກັບຈີນ.

ສມັຍການທ້ນໂຣມອານາຈັກຣ໋ລາວ ໃຫ້ ເປັນອານາຈັກຣ໋ແຖມຟ້າຄ້ັ້ງນີ້ ກ້ງກັບທາງຝ່າຍ ຈີນ ແມ່ນຣັຊສມັຍຂອງພຣະເຈົ້າ ເອ້ຽກຽມ ແຫ່ງຣາຊວ໋ງ໋ສ໋ສ໋ຍ (ຣາຊວ໋ງ໋ສ໋ສຸມາອີ) ພຣະເຈົ້າສິນຸ ໂລ ສ້ວ໋ງອານາຈັກຣ໋ແຖມຟ້າ ຫລ໊ືອານາຈັກຣ໋ຫນອງແສ ໃຫ້ມີຄວາມເຂ້ັ້ມແຂງ ສາມາຕຕ໋ໍ່ຕ້ານ ການຮຸກຮານ ຂອງຈີນໄດ້ ຈີນພາໃຫ້ຈີນເຊ໋ົາດູນ໋ນຊົນຊາຕລາວ ແລະຍອມຮັບຮູ໋ຖານະຄວາມເປັນ ຊາຕຂອງລາວ ໃນຊ໋ື່ວ່າ *ເຈົ້າແຫ່ງດິນແດນເຂຕໃຕ* ຫລິນ່ານເຈົ້າ ຕ້ັ້ງແຕ່ບັດນັ້ນມາ.

ຄວາມຫມາຍ ຂອງພາສາກ່ຽວຂ້ອງກັບຄ່ຳວ່າ ນ່ານເຈົ້າ ເມືອງແຖມ ແລະຫນອງແສ ນ້ີ ເຖິງ ແມ່ນເປັນຊ໋ື່ຂອງດິນແດນດຽວກັນ ແຕ່ ມີຄວາມຫມາຍຕ່ຳງກັນ ເລັກນ້ອຍ ດ່ັ້ງນ້ີ ຄ໋ື:

- ຄ່ຳວ່າ ຫນອງແສ ຫມາຍເຖິງ ສະຖານທ໋ີ່ຕ້ັ້ງ ຂອງນະຄອຣຫລວງ ຂອງຊົນຊາຕອ້ຍລາວ ຍຸຄອານາຈັກຣ໋ໃຫມ່ ຫລ້ງຈາກທ໋ີ່ຖ໋ກຈີນຄອບຄອງມາ ດົນນານ ແຕ່ສມັຍຂ໋ົ້ງເປ້ັ້ງ ແລະກ່ໍ່ຂຍາຍ ຕ໋ວມາຕ້ັ້ງຖ໋ິ່ນຖານ ຢູ່ທ໋ີ່ບ໋ໍຣິເວນຫນອງແສ (ປ້ຈຈຸບ້ນ ຄ໋ືບ໋ໍຣິເວນ ທະເລສາບ ເອ໋ີຣ໋ານ) ແລະຕ້ັ້ງ

ເມືອງຫນອງແສ (ຊິຫລົງເຈົ້າ) ເປັນນະຄອຣຫລວງ.

- ຄຳວ່າ ນ່ານເຈົ້າ ຫມາຍເຖິງຊື່ຂອງປະເທສ ຄືປະເທສ ທີ່ຕັ້ງຢູ່ດິນແດນພາຄໃຕ້ ຂອງຈີນ ຈຶ່ງບໍ່ຕ່າງກັບທີ່ພາກົຕ ເຫັນໃນປີ ຄ.ສ. 1802 ທີ່ຈັກຣ໌ພັຕຢາລອງ ແຫ່ງອຸດນາມ ໄດ້ປະກາສປ່ຽນຊື່ບ້ານເມືອງ ແລະຊື່ຊາຕຂອງຕົນ ຈາກ ຊື່ເດີມຄື *ນາມອຸດ* ທີ່ແປວ່າ "*ອຸດ ແຫ່ງດິນແດນເຂຕໃຕ້*" ໃຫ້ເປັນຊື່ໃຫມ່ ເອີ້ນວ່າ "*ອຸດນາມ*" ນັ້ນເອງ.

- ອີກຄຳວ່າ ແຖນ ຫລືອານາຈັກຣ໌ແຖນຟ້າ ຫມາຍເຖິງອ້າຍລາວ ທຸກຄົນ ປະກາສຕົນເປັນແຖນ ເປັນໄທ ຫລືເທພ ເຈົ້າ ຫລືເປັນອິສຣະຊົນ ຢູ່ເຫນືອຄຳປະມານດູນິນ ຂອງຊົນຊາຕຈີນ. ຈີນເປັນເທພເຈົ້າແຕ່ກະສັຕຣິຍ໌ ສ່ວນ ອ້າຍລາວ ເປັນເທພເຈົ້ານ່ຳກັນ ຫມົດທຸກຄົນ.

ສະນັ້ນ ອານາຈັກຣ໌ລາວຕອນນີ້ ຈຶ່ງຮຽກກັນຫລາຍຊື່ ຄືຈະເອີ້ນວ່າ ອານາຈັກຣ໌ແຖນ ຫລືເມືອງ ແຖນ ກໍ່ໄດ້,ຈະເອີ້ນອານາຈັກຣ໌ ຫນອງແສ ກໍ່ໄດ້ ຫລື ຈະເອີ້ນອານາຈັກຣ໌ນ່ານເຈົ້າ ກໍ່ໄດ້.

ຈາກພົງສາວະດານໂຍນົກ ຂອງພຣະຍາປະຊາກິຈຈະກອຣຈັກຣ໌ (ແຊ່ມ ບຸນນາຄ) ທີ່ຂຽນຕອນ ກ່ຽວກັບ ປະເທສນ່ານເຈົ້າ (1) ໂດຍກ່າວວ່າ " ອານາເຂຕທີ່ຮຽກວ່າ ອ້າຍລາວ ແລ້ວປ່ຽນມາ ເປັນ ນ່ານເຈົ້າ ນັ້ນ ທິສປັຈສິມ (ຕາວັນຕົກ) ຕິດກັບດິນແດນມະຄົທ (ປະເທສອິນເດັຽ...ພູ້ຂຽນ) ທິສພາຍັບ (ຕາວັນຕົກສຽງເຫນືອ) ຕິດກັບທິເບຕ ອັນເປັນປະເທສ ເຊິ່ງຕົ້ນຂັຕຕິຍະວົງສ໌ ພະມ້າ ໄດ້ນາຈາກທີ່ນັ້ນ, ທິສໃຕ້ ຕໍ່ແດນປະເທສ ເຊິ່ງເຈົ້າປະເທສເປັນແມ່ຍິງ ແຕ່ສາມີ ເປັນພໍ່ຄ້າຊາວ ອິນເດັຽ ໃນຕຳນານວ່າ ຄືກັນພູຊາ* ທິສອາຄະເນ (ຕາວັນອອກສຽງໃຕ້) ຕໍ່ດິນແດນຍາວຈີ ຄືດິນ ແດນຕັງເກັຽ ແລະອານາມ, ທິສຫໍຣະດີ (ຕາວັນຕົກສຽງເຫນືອ) ຕໍ່ແດນພະມ້າ ທິສເຫນືອແລະ ອີສານ (ຕາວັນອອກສຽງເຫນືອ) ຕໍ່ດິນຈີນ ນົນທົນເສສວນ ແລະກວາງໄຊ."

ພຣະເຈົ້າຂຸນບູລົມ ຄອງຣາຊບັນລັງກ໌ຫນອງແສ

****

ອານາຈັກຣ໌ຫນອງແສ ຖືກຕັ້ງຂຶ້ນໃນປີ ຄ.ສ.618 ຫລື ພ.ສ.1161 ໂດຍການນຳຂອງພຣະເຈົ້າສີນຸໂລ ແລະ ສມັຍຣາຊວົງສ໌ຖັງ ຂອງຈີນ ຣະຫວ່າງ ຄ.ສ.742 ອານາຈັກຣ໌ນ່ານເຈົ້າ ໃນສມັຍຂຸນບູລົມ ຈຶ່ງປ່ຽນຊື່ເປັນ ໄທເມືອງ ຫລືຕ້າເຫນິງ ປະຊາຊົນລາວ ກໍປະກາສຕົນເອງ ເປັນ ໄທ ຫລືເປັນແຖນ (2)ຈຶ່ງນາຮອດສມັຍພຣະເຈົ້າຂຸນບູລົມ ຄ.ສ.712-750 ອານາຈັກຣ໌ຫນອງແສ ກໍ່ບັນລຸເຖິງຄວາມຈະເຣີນຮຸ່ງເຮືອງທີ່ສຸດ (ຣັຊການທີ 4 ຕ່ຈາກພຣະເຈົ້າ ສີນຸໂລ ຫລື ໄຊໂນວ໌ທລ໋) ພຣະເຈົ້າຂຸນບູລົມ, ລາວສມັຍຫລັງເມື່ອນິຍົມໃຊ້ພາສາປາລີ ແລ້ວເລີຍລາກສຽງໃສ່ພາ ສາປາລີວ່າ ຂຸນບູລົມ ແລະເພື່ອເປັນກຽຕແກ່ພຣະອົງ໌ ຈຶ່ງຖວາຍພຣະນາມວ່າ ຂຸນບູຣົມ ຣາຊາທິຣາຊ ແຕ່ ຈີນໄດ້

---

(1) ພຣະຍາປະຊາກິຈຈະກອຣຈັກຣ໌ (ແຊ່ມ ບຸນນາຄ) ພົງສາວະດານໂຍນົກ ປີ 2516 ຫນ້າ 29

(2) ປຣາບ ສີຣິທອຣ ຫນັງສື " ເຫນືອແຄວ້ນແດນສຍາມ" ທີ່ຊຽງໃຫມ່ ປີ 2528 ຫນ້າ 74

ອອກສຽງວ່າ "ພິລ່ໂກວະ" ນັ້ນ ກໍ່ຄື ພິລ ຫມາຍເຖິງ "ບຸລົມ" ແລະ ໂກວະ ຫມາຍເຖິງ " ຂຸນ" ໃນພົງສາວະດານພວນ ເອີ້ນພຣະນາມຂຸນບຸລົມວ່າ "ຂຸນບໍລິນິວ"

ຕາມພົງສາວະດານຈີນ ກ່າວໄວ້ວ່າ ເມື່ອຂຸນບູລົມ ຂຶ້ນຄອງອຳນາຈ ແທນກະສັຕຣິຍ໌ຫນອງ ແສ ອົງຄ໌ກ່ອນ ຕໍ່ ຈາກພຣະເຈົ້າ ແສນລາວີ (ຈີນອອກສຽງວ່າ ເຊັ່ງ ໂລ ປີ)ທີ່ເປັນຣາຊໂອຣົສ ຂອງພຣະເຈົ້າ ລາວແສງເຢັນ (ຈີນ ອອກສຽງວ່າ ໂລເຊັ່ງເຢັນ....ລາວແສງເຢັນ ເປັນໂອຣົສ ຂອງ ສີນຸໂລ)ປະເທສມ່ານເຈົ້າ ກໍ່ບັນລຸຄວາມຈະເຣີນຮຸ່ງ ເຮືອງ ເຖິງທີ່ສຸດ ພຣະອົງຄ໌ ໄດ້ສ້າງຄວາມສັນພັນທ໌ທາງການທູຕ ກັບປະເທສຈີນ ຢ່າງສນິທແທ້ນ ແລະ ພ້ອມດຽວ ກັນນັ້ນ ພຣະອົງຄ໌ ກໍ່ໄດ້ຊົງທ້ອນໂຮມ ຫົວເມືອງລາວ ທຸກແຫ່ງ ເຊິ່ງປະກອບດ້ວຍຊົນເຜົ່າຕ່າງໆ ໄດ້ ເຖິງ 12 ຫົວ ເມືອງ ຈຶ່ງສະຖາປະນາ ສທະພັນທ໌ຣັຕ ລາວຫນອງແສ ຂຶ້ນໄດ້ສຳເຣັດ ໃຫ້ເປັນອານາຈັກຣ໌ທີ່ຍິ່ງໃຫ່ ມີອຳນາຈສູງ ສຸດ. ອານາຈັກຣ໌ຫນອງແສ ມີເອກຣາຊແຕ່ປີ ພ.ສ.1161-1826 ຫລື ຄ.ສ.618-1283 ເປັນເວລາ 665 ປີ. ຂຸນອ້າຍລໍ ໂອຣົສອົງຄ໌ໃຫ່ ຂອງຂຸນບູລົມ ນາສ້າງເມືອງຊະວາ.

ຂຸນລໍ ຈີນ ອອກສຽງວ່າ ໂກະລ໋ຝຸ ຫລື ໂກລ໋ເຟັ່ງ(ໂກະ ຄືຂຸນ) ຫລື ພຣະເຈົ້າກາລະຫົ (1) ແລະກ່ອນທີ່ຈະຍົກກຳລັງລົງມາ ຜາບພວກຂອມກັນຣາ ຍຶດຄອງເມືອງຊະວາ ໃນປີ ຄ.ສ. 739 ນັ້ນ ພຣະອົງຄ໌ໄດ້ຂຍາຍອຳນາຈຂອງອານາຈັກຣ໌ຫນອງແສໄປທົ່ວທຸກທິສ ຈົນເມື່ອພຣະເຈົ້າຂຸນ ບູລົມ ໄດ້ສເດັຈສວັຣຄ໌ຄົຕ (ອ່ານວ່າ ສວັນນະຄົດ) ໃນປີ ຄ.ສ.750 ແລ້ວ ພຣະອົງຄ໌ ກໍ່ຂຶ້ນສເວີຍ ຣາຊໃນອານາຈັກຣ໌ຫນອງແສ ແລະຣາຊໂອຣົສຂອງພຣະອົງຄ໌ ຄືອ້າຍເມືອງຊະວາ (ອີເນົາຊຶນ) ໄດ້ສເວີຍຣາຊສົມບັຕທີ່ເມືອງຊະວາ ສືບຕ່ໍວົງກະສັຕຣິຍ໌ລົງມາ ຈົນຮອດຣັຊການພຣະຍາລັງ ພຣະ ຣາຊບິດາຂອງພຣະຍາສຸວັນນະຄຳຜົງ.

ໃນສມັຍພຣະເຈົ້າໄຊໄນອ໋ທ໋ ປົກຄອງນະຄອຣຫນອງແສ ຄັ້ງນັ້ນ ພຣະອົງຄ໌ໄດ້ຂຍາຍພຣະຣາຊອຳນາຈ ອອກໄປ ຢ່າງກວ້າງຂວາງ ໄດ້ຍົກທັບໄປທຳສົງຄາມກັບທີເບຕ ແລະໄດ້ຣົບເອົາຊນະປະເທສຈີນ ຫລາຍຄັ້ງ ຈົນພວກຈີນຍອມ ຮັບເປັນສັນພັນທະໄມຕຣີ ກັບລາວ ຍົກຍ້ອງອານາຈັກຣ໌ຫນອງແສ ວ່າ" ນ່ານເຈົ້າ" ອານາເຂຕ ຂອງປະເທສ ນ່ານເຈົ້າ ທິສເໜືອ ຕິດກັບດິນແດນຈີນ, ທິສໃຕ້ ຕິດກັບອານາຈັກຣ໌ຟ່ນັນ ຫລືພະນົມ (ສຣີໂຄຕຫອງ) ແລະ ນອນທະອາຣາ ອະດີ ທິສຕາວັນອອກຕິດກັບປະເທສເກົາຈິ ຫລືຕົງແກ ທິສຕາວັນຕົກ ຕິດກັບປະເທສທີເບຕ ທິສຕາວັນຕົກສ່ຽງ ໃຕ້ ຕິດກັບປະເທສພະມ້າ.ດິນແດນນ່ານເຈົ້າ ກວມເອົາເຂຕນົນທົນຍຸນນ່ານ ໄກວເຈົ້າ ແລະນົນທົນເສສວນແລະກວາງ ຊີ ໃນບາງສ່ວນ.

---

(1) ສງວນ ໂຊຕິສຸຂຣັຕນ໌ ໃນຕຳນານເມືອງເຫນືອ ກ່າວວ່າ ໂກວະລໍ ເຝັ່ງ ຫມາຍເຖິງພຣະເຈົ້າກາລະຫົງສ໌ ຫລືເທວະ ກາລ ໃນພົງສາສະດາຣໂຍນົກ ແລະວ່າ ພຣະເຈົ້າສິງຫາມະວັຕ ຜູ່ມາສ້າງອານາຈັກຣ໌ລ້ານນາ (ຊຽງແສນ) ກໍແມ່ນ ໂອຣົສ ອົງຄົນ້ອຍ ຂອງເຈົ້າຂຸນອ້າຍລໍ ນັ້ນເອງ...

ຕຳນານເມືອງເຫນືອ ຂຽນໂດຍທ່ານສງວນ ໂຊຕິສຸຂະຣັຕນ໌ ປີ 2504 ຫນ້າ 152.

ພຣະເຈົ້າສີນຸໂລ ຫລືໄຊໂນຫລໍ່ ຄອງຣາຊມາໄດ້ 36 ປີ ຈົ່ງສວັຣຄົຕ ຄືຈາກ ຄ.ສ.618 ເຖິງ ປີ ຄ.ສ.654 ແລ້ວຕໍ່ຈາກພຣະອົງຄ໌ ກໍ່ແມ່ນພຣະຣາຊໂອຣົສ ມີພຣະນາມວ່າ ພຣະເຈົ້າ ລາວແສ (ຈີນອອກສຽງວ່າ ໂລເຊ) ໃນສມັຍພຣະເຈົ້າລາວແສ ນີ້ ປະເທສຊາຕ ໄດ້ຮັບຄວາມປົກກຸ່ນ ວຸ່ນເຍັນ ບໍ່ມີເສີກສົ່ງຄາມໃດໆ ພາກົຕມີບັນທຶກໄວ້ວ່າ ໃນປີ ຄ.ສ. 690 ໃນງານ ຣາຊາພິເສກ ຂອງພຣະນາງບູເຊັກທຽນ ພຣະເຈົ້າລາວແສ ກໍ່ໄດ້ຖືກອັ້ງເຊີນໄປຮ່ວມຣາຊພິທີ ຄັ້ງນັ້ນດ້ວຍ.

ພຣະເຈົ້າຂຸນບູລົມ ຂຍາຍອໍານາຈ
ສົ່ງພຣະຣາຊໂອຣົສ ອອກໄປຄອງດິນແດນຕ່າງໆ

****

ພຣະເຈົ້າຂຸນບູລົມ ມີພຣະອັຄມະເທສີ 2 ພຣະອົງຄ໌ ຄື ພຣະນາງເອັກແຄງ ແລະພຣະນາງຍົນມະຜາລາ ແລະເມື່ອ ໄດ້ຂຶ້ນຄອງຣາຊແທນບິດາ ຄືພຣະເຈົ້າ ເຊັ່ງລາວປີ (ແສນລາວປີ) ໃນປີ ຄ.ສ.728 (ຫລື 7 12)ແລ້ວ ພຣະອົງຄ໌ ກໍ່ ໄດ້ດໍາເນີນນະໂຍບາຍ ຂຍາຍເຂຕແດນ ອານາຈັກຣ໌ຫນອງແສ ໂດຍໄດ້ຈັດສົ່ງພຣະຣາຊໂອຣົສ 7 ອົງຄ໌ໃຫ້ໄປຄອງ ເມືອງໃນດິນແດນຕ່າງໆ ຄື:

(1) ຂຸນອ້າຍລໍ (ຈີນເອີ້ນວ່າ ໂກວະລໍຝຸ) ອ້າຍ ແປວ່າ ຄົນທີ 1
(2) ຂຸນຍີ່ຫລ້ານ ຫລື ຂຸນຫລ້ານ ຍີ່ ກໍ່ຄື ຄົນທີ 2
(3) ຂຸນສາມຈຸສົ່ງ ຫລື ຂຸນຈຸສົ່ງ ສາມ ກໍ່ຄື ຄົນທີ 3
(4) ຂຸນໄສພົ່ງ ຫລື ຂຸນພົ່ງ ໄສ ກໍ່ຄືຄົນທີ 4
(5) ຂຸນລົກກົນ ຫລື ຂຸນກົນ ລົກ ກໍ່ຄື ຄົນທີ 5
(6) ຂຸນງົ່ວ ອົນ ຫົ ຂຸນອົນທ໌ ງົ່ວ ກໍ່ຄື ຄົນທີ 6
(7) ຂຸນເຈົ໊ດເຈົ໊ອ ຫລື ຂຸນເຈົ໊ອ ເຈັດ ກໍ່ຄື ຄົນທີ 7

ຄືຫມາຍຄວາມວ່າ ປະເທສອາຍລາວຫນອງແສ ໄດ້ມີການຂຍາຍອິທທິພົລ ນະໂຍບາຍ ອອກໄປທົ່ວທຸກແຫ່ງ ໃນສມັຍພຣະເຈົ້າຂຸນບູລົມ ນັບແຕ່ ຣະຫວ່າງປີ ຄ.ສ. 739–750 ຄື:

(1) ເຂຕແມ່ນ້ໍາຂອງ ຟາກຕາວັນອອກ ຄືທີ່ເຂຕເມືອງຊິ່ວຫລືເມືອງຊະວາ (ຫລວງພຣະບາງ) ໂດຍການນໍາຂອງຂຸນອ້າຍລໍ ທີ່ຕິຊນະ *ພວກຂອມກັນຣາງ* ຕໍ່ມາ ຈົ່ງເກີດເປັນປະເທສລ້ານຊ້າງ.

(2) ເຂຕແມ່ນ້ໍາຂອງ ຟາກຕາວັນຕົກ ຄື ທີ່ເຂຕສຸວັນນະໂຄມຄໍາ ຂອງ *ມອນທະວາຣາວະດີ* ເຂຕນີ້ ໂດຍການນໍາຂອງຂຸນໄສພົ່ງ ຈົ່ງເກີດເປັນອານາຈັກຣ໌ຍວນຊ້າງ ຕໍ່ມາ ກໍ່ປຽ່ນເປັນລ້ານນາ.

(3) ເຂຕແມ່ນ້ໍາ ແດງ ແມ່ນ້ໍາດໍາ ໃນອານາຈັກຣ໌*ຂອມຈຸລນີ ພຣົມທັຕ* ໂດຍການນໍາຂອງຂຸນ ສາມຈຸສົ່ງ, ຕໍ່ມາ ຈົ່ງກາຍມາເປັນອານາຈັກຣ໌ 12 ຈຸໄທ ມີໄລ່ເຈົ້າ ລາວກາຍ ແລະເມືອງແຖງ.

(4) ເຂຕແມ່ນ້ຳຂອງ ຟາກຕາວັນຕົກ ໄປຕາມລຸ່ມແມ່ນ້ຳເຈົ້າພຣະຍາ ໂດຍການນ່ຳຂອງຂຸນ ອິນ ຫລືຂຸນວົ່ວອິນທ໌ ໃນເຂຕອານາຈັກຣ໌ລ້ານເພ ສຣີອະຍຸທຍາ ຕໍ່ນາຈົ່ງເກີດເປັນອານາຈັກຣ໌ ສຍາມ ແລະຫາກ່ໍນາກາຍເປັນ ຣາຊອານາຈັກຣ໌ໄທຍ ໃນປີ 1938.

(5) ເຂຕແມ່ນ້ຳອິຣະວະດີ ຕອນຕົ້ນ ແລະສາລະວິນ ຄື ເຂຕຫ່ແຕ ເຂຕອານາຈັກຣ໌ແສນຫວີ ລາວລ໊ ໂດຍການນ່ຳຂອງຂຸນຍີ່ພາລ້ານ ຕໍ່ນາ ຈົ່ງກາຍເປັນອານາຈັກຣ໌ສິບສອງພັນນາ ລ໊ ແລະ ຕົກເປັນຂອງຈີນ (1) ໃນປະມານສັຕວັສທີ 16 ປັຈຈຸບັນ ຍັງມີເຊ້ືອເຈົ້າຂອງຕົນຢູ່ ແຕ່ຢູ່ໃນການ ປົກຄອງ ຂອງຈີນໂດຍກົງ ຄົງຈະຫມົດອະນາຄົຕທີ່ຈະກາຍເປັນຊາຕເອກຣາຊ ຕໍ່ໄປໄດ້ອີກ.

(6) ເຂຕແມ່ນ້ຳຂອງ ຕອນໃຕ ທີ່ດິນແດນສຣີໂຄຕບອງ ຄື ເມືອງຫລ້າຄ່ານວ່ນ ໂດຍການນ່ຳ ຂອງຂຸນກົມ ຫລືຂຸນລົກກົມ. (ສ່ຳຣັບໂອຣົສ ຄົນທີ 6 ນີ້ ບ່ຄ່ອຍແນ່ນອນ ບາງແຫ່ງວ່າ ໄປຄອງ ເມືອງຄ່ານເກິດ ບາງແຫ່ງວ່າຊຽງຄານ ບາງສະບັບວ່າ ເມືອງນອນ ແລະບາງສະບັບ ກ່ໍວ່າ ເມືອງ ຫົງສາ (ອາຈບ່ອນແຂວງຊ໊ຍບູຣີ ຫລ ຫົງສາວະດີ ເມືອງນອນ ກ່ໍໄດ ຍັງມີບາງສະບັບວ່າ ເມືອງ ຊຽງຄົນ ຫລ ອິນທະປັຕຖະນະຄອຣ (ຂເມຣ) ບາງສະບັບວ່າ ລ໊ພບູຣີ ...ຈົ່ງບ່ໍມີແຈ່ນແຈ້ງ)

(7) ເຂຕປາຍແມ່ນ້ຳຊ໊ນ ໃຕ້ເມືອງແຖນ ໂດຍການນ່ຳຂອງຂຸນເຈ໊ດເຈ໊ອງ ຈົ່ງເປັນອານາຈັກຣ໌ ພວນ. ມີຊື່ດຽວກ໊ບຂຸນເຈ໊ອງ ຂອງລ້ານນາ ທີ່ວ່າໄປມີອ່ຳນາຈຢູ່ແກວປະກ໊ນ ຫລ ເຂຕຫົວພ໊ນຫ້ວ ຫ້ວຫ໊ກ ຈົນເຖິງມີກ່ວ່ກ໊ນວ່າ ໄຫຫ໊ນ ທີ່ບ່ຣິເວນທ່ີ້ວໄຫຫ໊ນ ນ໊ນ ແມ່ນໄຫເຫລ້ົາເຈ໊ອງ.

ການປົກຄອງ ອານາຈັກຣ໌ນ່ານເຈ້ົ

****

ໃນສມ໊ຍນ່ານເຈ້ົ ມີການຈ໊ດຣະບຽບການປົກຄອງ ທ໊ນສມ໊ຍ ພ່ສົມຄວນ ໂດຍມີຣະດ໊ບຂ໊ັ້ນຮ໊ບ ຜ໊ດຊອບປະຕິ໊ບ໊ດງານ ກຽ່ວໂຍງກ໊ນ ຢ່າງເປັນຣະບົບ(2) ດ່ັງຕ່ໄປນ້ີ:

(1) ພຣະມະຫາກະສ໊ຕຣິຍ ຣຽກວ່າ ພ່ຂຸນ ຫລ ຂຸນ (ໂກວ ຄ ປະເທສ ຫລ ທ່ີ ອ່ຳນາຈ ປົກຄອງປະເທສ ໂດຍມີຖ່ານະເປັນເຈ້ົ້ າຂອງພ໊ນເມືອງ)

(2) ມະຫາອ່ຳມ໊ດຕຍ ເປັນ ຜ ູ ຣອງ ຮ໊ບຜ ິ ດຊອບການ ບ ່ ຣ ິ ຫ ານຣ າ ວ ານ ຕ າ ວ ຫນ ້ າ (ຕ າ ວ ພ ຣ ະ ພ ັ ກ) ພ ຣ ະ ມ ະ ຫ າ ກ ະ ສ ັ ຕ ຣ ິ ຍ ์

(3) ຕ ่ ລ ິ ງ ນ າ ກ ่ ແ ມ ่ ນ "ຄ ນ ະ ທ ่ ປ ົ ກ ສ ານ ຣ າ ຊ ການ ແ ຜ ่ ນ ດ ິ ນ ຄ ื ສ ะ ພ า ท ่ ป ึ ก ส า พ ร ะ ม ะ ห า ก ะ ส ั ต ร ิ ย ์ ม ั ้ น เ อ ง .

---

(1) ໃນສມ໊ຍເສຕຖາທິຣາຊ ໃນຕອນທ່ີ ປົກຄອງຊຽງໃໝ່ ນ໊ນ ພວກສ໊ບສອງພ໊ນນາລ໊ ຍ ັ ງ ມ ີ ຊ ื ่ ສ ຽ ง ແ ລ ะ ม ิ ເ ອ ກ ສ ານ ຣ າ ຊ ຢ ู ่ . (2) ປ ຣ ານ ิ ส ิ ธ ิ ห อ ธ จ า ก ห น ั ง ส ื " เ ห ม ื อ ง แ ถ ว น ้ ำ แ ด น ส ย า ม " ช ย ง ใ ห ม ่ พ . ส . 2528 ห น ้ า 78

(4) ຫົວຫນ້າ ຝ່າຍປົກຄອງ ຫຸ່ນຶ່ງ

(5) ຫົວຫນ້າ ຝ່າຍບໍ່ຣິຫານ ຫຸ່ນຶ່ງ

ແລະຂຶ້ນກັບຫົວຫນ້າປົກຄອງ ແລະຝ່າຍບໍ່ຣິຫານ ຈະມີພແນກງານຕ່າງ ດ້ງນີ້ ຄື:

(ກ) ຝ່າຍການຣທະຫານ (ຂ) ຝ່າຍບັນຊີພິລເມືອງ (ຄ) ຝ່າຍປະເພນີ (ງ) ຝ່າຍຕັດສິນຄະດີຄວາມ (ຈ) ຝ່າຍປົກຄອງ (ສ) ຝ່າຍກໍ່ສ້ງ (ຊ) ຝ່າຍການເງິນ (ຍ) ຝ່າຍກິຈຈະການຕ່າງປະເທສ (ດ) ຝ່າຍການຄ້າ ພານິຊຍ໌

ຕໍ່ລົງມາ ຈະມີ ທ່ານຊຸນວຽງ ກຳກັບນ່າ

(ກ) ເຈົ້ຣາຊວົງສ໌ (ຂ) ກິຈການນັກປຣາຊຍ໌

(ຄ) ຫນ່ວຍງານຣາຊວົງສ (ງ) ຫນ່ວຍງານນັກປຣາຊຍ໌

ເກົ້າເມືອງ ຫຸ່ຣັບຜິດຊອບພິລເມືອງ

ພໍ່ເມືອງ ຫລີເຈົ້າເມືອງ

ກວານບ້ານ ຫລີພໍ່ບ້ານ

ຈາກຫນັງສື History of Siam (1) ຂອງທ່ານ W.A.R Wood ທີ່ບັຣຍາຍສະພາພຄວາມເປັນຢູ່ ຂອງພວກໄຕ ຫລືອ້ຍລາວ ທີ່ອານາຈັກຣ໌ນ່ານເຈົ້າ ໃນສມັຍພຣະເຈົ້າກຸໄບລຊ່ານ ໂດຍອ້ງເຖິງບັນທຶກ ຂອງມາໂຄ ໂປໂລ (Marco Polo) ດ້ງນີ້ເນື້ອຄວາມຕໍ່ໄປນີ້

Marco Polo visited Southern China about A.D 1272, after the conquest of Nanchao by Kublai Khan. He describes non-Chinese races living in the South and South-west of China presumably these are T'ai people.

Marco Polo mentions the province of Karaaian with its capital at Yachi (probably Talifu) The people of this province were econolators had a language peculiar to themselves lived on rice, and used cowrie shell as money and for ornament. They also eat raw meat, chopped up and put into a pickle of salt and spices. This is the dish known as lap in the Northern Siam at the present time.

(ທ່ານນາຣໂຄ ໂປໂລ ໄດ້ໄປຢຽ້ມຢາມປະເທສຈີນ ຣະຫວ່າງ ຄ.ສ.1272 ພາຍຫລັງທີ່ພຣະເຈົ້າກຸໄບລຊ່ານ ບຸກຍຶດເອົາປະເທສນ່ານເຈົ້າໄດ້ແລ້ວ. ນາຣ໌ຄໂປໂລ ອະທິບາຍວ່າ ພິລເມືອງບັນດາຊົນຊາຕ ທີ່ບໍ່ແມ່ນຈີນແທ້ ນັ້ນ ພາກັນຕັ້ງຖິ່ນຖານ ຢູ່ບໍ່ຣິເວນເຂຕພາຄໃຕ້ ແລະຕາວັນຕົກສຽງໃຕ້ຂອງຈີນ ແທ້ຈິງ ຄົງຈະແມ່ນຊາຕໄຕ.

(1) W.A.R Wood, History of Siam, Chiangmai 1924 page 39

ນາຣໂລ ໂປໂລ ກ່າວເຖິງແຂວງ ຫລືນິນທິນກາຣາອຽນ (Kara-aian) ພ້ອມທັ້ງຊື່ນະຄອຣຫລວງ ຂອງແຂວງດັ່ງກ່າວ ທີ່ນີຊື່ວ່າ ຍະຊິ (Yachi) ອາຈແມ່ນເມືອງຕາລີຟູ (Talifu) ກໍ່ໄດ້ແລະກ່າວ ວ່າ ປະຊາຊົນ ຂອງແຂວງນີ້ ມີກາຣນັບຖືຮູບປັ້ນ ແລະກໍ່ມີພາສາປາກເວົ້າ ລັກສນະຂອງພວກເຂົາ ເອງ ມີກາຣປູກເຂົ້າເປັນອາຫາຣປະຈຳວັນ ແລະໃຊ້ເປືອກຫອຍ (ຊນິດນຶ່ງ) ແທນເງິນຕຣາ ພ້ອມ ທັ້ງໃຊ້ເປັນເຄື່ອງປະດັບອີກດວ້ຍ. ແລະ ປະຊາຊົນຂອງແຂວງນີ້ ກິນຊີ້ນດິບ ຟັກມຸ່ນແລະໃສ່ເຄື່ອງ ດອງດວ້ຍເກືອເຄັ້ມ (ຄົງຫມາຍເຖິງປາແດກ....ພູ່ຂຽນ) ແລະມີເຄື່ອງປະກອບອາຫາຣຕື່ມ ແລະ ອາຫາຣປະເພທນີ້ ຄືກັນກັບອາຫາຣທີ່ເຂົາເອີ້ນວ່າ ລາບ ທີ່ເຄີຍເຫັນຢູ່ພາຄອີສານ ຂອງປະເທສ ໄທຍ ໃນປັຈຈຸບັນ ນັ້ນເອງ.

ສ່ຳຣັບ ສະພາພຄວາມເປັນຢູ່ຂອງອານາຈັກຣ໌ນ່ານເຈົ້າ ນັ້ນ ອີງຕາມປະວັຕິສາສຕຣ໌ຈີນ ແຈ້ງ ໃຫ້ເຮົາຊາບວ່າ ອານາຈັກຣ໌ນີ້ ວ່າ ປະກອບໄປດວ້ຍຊົນເຜົ່າຕ່າງໆ ຄື ໄຕ (T'ai) ຫລໍຫລ (Lolo) ແລະ(Naga) ແລະ ຄົນພວກນີ້ ບໍ່ແມ່ນຈີນຕັ້ງຊື່ໃຫ້ ແຕ ພວກເຂົາ ຫາກ ປະກາສຕົວເອງວ່າ ຈຽວ ພາໃຫ້ຈີນເອີ້ນຄົນພວກນີ້ວ່າ ນ່ານ ຫລືຫນານ ແປວ່າ ໄທໃຕ ຫລືເຈົ້າທ່າງເຂຕໃຕ້.

ປະວັຕິສາສຕຣ໌ຂອງຈີນ ທີ່ຣີບໂຮມໃຫມ່ (1) ກ່າວວ່າ ໃນເຂຕຍຸນນ່ານ ເປັນຣັຕຖ໌ທີ່ມີຄົນຕັ້ງຖິ່ນ ຖານຢູ່ຫລາຍຊົນເຜົ່າຣ່ວມກັນ ແລະຊົນເຜົ່າຕ່າງໆນັ້ນ ມີຂນົບທັມນຽມປະເພນີ ໃກ້ຄຽງກັນຫລາຍ ຈ່ຳງ່າຍໃນກາຣທອ້ນໂຮມເຂ້ົາ ເປັນປະເທສດຽວກັນ ແລະຕ່ໍມາ ກໍ່ກາຍເປັນ"ສຫະພັນທ໌ຣັຕຖ໌" ອາ ນາຈັກຣ໌ນ່ານເຈົ້າ ມີຄວາມຈະເຣີນສງ່ສດ ໃນສມັຍເຈົ້າຂນບລົນ (ພິລໍເກາະ ຫລື ພິລໍເກ໋) ຣະ ຫວ່າງ ຄ.ສ.707 ເຖິງ 757 ກະສັຕຣິຍ໌ນ່ານເຈົ້າ ພຣະອົງຄ໌ນີ້ ສາມາຕຖ໌ທອ້ນໂຮມເອົາຣັຕຖ໌ອື່ນໆ 5 ຣັຕຖ໌ ເຂ້ົາໂຮມກັນໄດ ້ ຈັດຕັ້ງນ່ານເຈົ້າໃຫ້ເຂັ້ມແຂງທີ່ສຸດ.

ອານາຈັກຣ໌ນ່ານເຈົ້າ ນິຍົມກາຣປູກຝັ້ງ ແລະຕັ້ງຊີວິຕຢູ່ຕາມລຸ່ມແມ່ນ້ຳ ກາຣໄຖນາ ໃຊ້ຄົນ 3 ຄົນ ຄືຜູ່ນຶ່ງ ຈູງງົວ ອອກຫນ້າໄຖ ຜູ່ນຶ່ງຄຸມໄຖ ແລະຜູ່ນຶ່ງຕອ້ນງົວໄປຕາມທາງ. ພວກນ່ານເຈົ້າ ເຣັດນາ ປີລະເທ໋ອ ແລະຜູ່ທີ່ເຣັດນາປີລະເທ໋ອນັ້ນ ບ່ໄດ້ເສັຽພາສີ ແຕ່ຜູ່ເຣັດນາປີລະ 2 ເທ໋ອນັ້ນ ໃຫ້ເສັຽພາສີ.

ແລະພວກປະຊາຊົນນ່ານເຈົ້າ ນິຍົມລຽ້ງມອ້ນ ແລະຕ່ຳຜ້າໄຫມ ປະຊາຊົນເຣັດອາວຸທສ໋ົງຄາມ ໃຊ້ເອງ.ນ່ານເຈົ້າເປັນປະເທສມີຣະບຽບວິນັຍດີຫລາຍ ຈ່ຳງມີກ່ຳລັງທະຫານເຂັ້ມແຂງ ສ່ຳຣັບພວກ ທີ່ເປັນທະຫານນັ້ນ ຫາກຖ໋ກອາວຸທ ຂອງສັຕຣູ ຈະໄດ້ຮັບກາຣຮັກສາປິ່ນປົວ ຢ່າງເອົາໃຈໃສ່ທີ່ສຸດ ທະຫານທີ່ຖ໋ກອາວຸທ ທາງຂວ້ງຫລັງ ຈະຕອ້ງຖ໋ກຂ້ ່ າຖິ້ມ ທັນທີ. ໃນສມັຍຣາຊວ໋ົງ ຕ້ານີ້ ອານາຈັກຣ໌ ນ່ານເຈົ້າມີຄວາມສັມພັນທ໌ກັບຈີນ ເປັນຢ່າງດີ ບັນທ໋ກປະວັຕິສາສຕຣ໌ຕອນນີ້ ກ່າວວ່າ ເວລານຶ່ງ

(1) ປຣານີ ສີຣິທອຣ ໃນຫນ້ັງສື "ເຫນືອແຄວ້ນແດນສຍາມ" ພິມພ໌ທີ່ຊຽງໃຫມ່ ພ.ສ.2528 ຫນ້າ 76-77

ນິຫລານຂອງພຣະເຈົ້າຂຸນບູລົມ ເດີນທາງໄປຢຽ້ມຢາມປະເທສຈີນ ຈີນໃຫ້ການຕອ້ນຮັບຢ່າງນິ ກຽຕທີ່ສຸດ ເລລານັ້ນ ຈີນໄດ້ສົ່ງຄນະນັກດົນຕຣີ ແລະນັກຟອ້ນຂອງຈີນ ເຂົ້ານາຢຽ້ມຢາມ ແລະ ນາສແດງ ທີ່ນ່ານເຈົ້າອີກດວ້ຍ.

ພຣະເຈົ້າຂຸນບູລົມ ໄດ້ສ້າງເມືອງຫລວງໃຫນ່ ເອີ້ນວ່າ ຕາລີຟູ ຫລືເມືອງຕ້າຫລີ່ ຫລືໄຕ່ລີ ຄືຫມາຍເຖິງເມືອງແຖນ ປັຈຈຸບັນ (ດຽນບຽນຟູ) ທີ່ບໍ່ຣິເວນ "ນາມອ້ຍອ້ຍຫນູ"ແລະພຣະອົງຄ໌ ກ່ນາປະທັບຢູ່ໃນເມືອງນັ້ນ ຈົນເຖິງເວລາສວັຣຄົຕ ເມື່ອ ຄ.ສ.750.

(ເຂຕເມືອງແຖນຂອງພຣະເຈົ້າຂຸນບູລົມ ຂຍາຍບໍ່ຣິເວນກວ້າງ ເກືອບໄປຮອດແຄມທະເລ ອ່າວຕົ່ງແກງ, ອີງຕາມ ແຜນທີ່ ໄດອຽດ (1) ຈະເຫັນລາວກາຍ ແລະລ້ຽຊອນ ຫລືເມືອງຊ້ອນ ຢູ່ເຫນືອຣາໂນຍ ຂຶ້ນໄປ)

ພຣະເຈົ້າຂຸນລ່ ເມື່ອໄດ້ຂຶ້ນສເວີຍຣາຊ ແທນພຣະເຈົ້າຂຸນບູລົມແລ້ວ ກ່ໄດ້ສເດັດໄປຢຽ້ມຢາມ ປະເທສຈີນ ໃນຣັຊການຂອງພຣະເຈົ້າຖ່ງມິງຕີ້, ຣັຊການທ ີ 6 ຂອງຣາຊວົງສ໌ຖ່ງ ໃນປີ ຄ.ສ.750 ນັ້ນເອງ,ຢູ່ທີ່ແຂວງຫູຫນານ ພຣະອົງຄ໌ຖືກເຈົ້າຄອງນະຄອຣຫູຫນານ ດຸ່ນ່ນປະນາທ ພ່ກັບຄືນນາ ພຣະອົງຄ໌ ນິຄວາມຄຽດແຄ້ນທີ່ສຸດ ຈ່ງຍົກກອງທັບໃຫ່ ເຂ້ົາບຸກໂຈມຕີຈີນ ຍຶດດິນແດນ ໄດ້ເຖິງ 32 ຕົວເມືອງ. ຈີນ ເອງ ກ່ໄດ້ພຍາຍາມບຸກນ່ານເຈົ້າຕອບໂຕ້ ຄືນຫລາຍເທ່ື ແຕ່ບ່ສ່ຳເຣັດ.

ກ່ອນຣາຊວົງສ໌ຖ່ງຂອງຈີນ ຈະເສ່ືອມ ແລະສລາຍຕົວໄປນັ້ນ ຍ້ອນການສ້ຣາສດຣ໌ (ໃຫ້ອ່ານວ່າ ຣາດ) ບ້ງຫລວງໃນວົງຣາຊການ ຢ່າງຮ້າຍແຮງ ເວລານັ້ນ ພວກທິເບຕ ເຊ່ົງຄ່ອຍໆມີກ່ຳລ້ງທັບ ເຂ້ັມແຂງຂ້ຶນ ຈ່ງສວຍໂອກາສ ຍົກກ່ຳລ້ງທັບເຂ້ົາຕີກອງທັບຣາຊວົງສ໌ຖ່ງ ແຕກສລາຍ ອ່ານາຈ ຂອງພວກຖ່ງທາງດ້ານເອເຊັຽກາງ ຈ່ງພ້ງທະລາຍລ້ງຫມົດ.ເວລານ ີ້ ນ່ານເຈ ົ້ າ ໃນສມັຍຂຸນລ່ ເຊ່ົງມີສັນພັນທະພາພກັບທິເບຕ ຢ່ງແຫນ້ນແຟ້ນກ່ໄດ້ໂອກາສ ຍົກທັບເຂ້ົາບຸກຕີອີກດ້ານນ ຶ່ງ ຍຶດ ເອົາດິນແດນປະເທສຈີນໄດ ້ ໃນດ ້ ານຕ ້ າວ ັ ນຕົກ ຄ ື ໄດ ້ ເຂຕນ ິ ນ ິ ທ ິ ນເສສວນ ທ ້ ງຫມ ົ ດ ໃນ ພ.ສ.1294 ຫລ ື ຄ.ສ.751 ແຫ ່ ງສມ ັ ຍຂ ອ ງພ ຣ ະເຈ ົ ້ າ ຂ ຸ ນລ ່ (ໂກະລ ່ ຝ ງ) ພ ຣ ະເຈ ົ ້ າ ຂ ຸ ນລ ່ ໄ ດ ້ ຣ ັ ບ ກ ານ ຂ ນ ານ ນ ານ ວ ່ າ ເປ ັ ນ ຜ ູ ່ ຍ ິ ່ ງ ໃ ຫ ່ ຽ ທ ່ າ ງ ພ າ ຄ ຕ າ ວ ັ ນ ອ ອ ກ ຫ ລ ື ທ ີ ່ ຈ ີ ນ ເ ອ ີ ້ ນ ວ ່ າ ຕ ຸ ງ ຕ ີ ້ ແ ລ ະ ພ ຣ ະ ເ ຈ ົ ້ າ ແ ຜ ່ ນ ດ ິ ນ ທ ິ ເ ບ ຕ ຊ ົ ງ ຂ ນ ານ ພ ຣ ະ ນ ານ ຂ ອ ງ ຂ ຸ ນ ລ ່ ວ ່ າ ພ ຣ ะ ເ ຈ ົ ້ າ ນ ອ ງ (**Younger Brother**)

ໃນຣັຊການຂອງພຣະເຈົ້າຂຸນລ່ ນ ີ້ ອານາຈັກຣ໌ຫນ່ານເຈ ົ້ າ ແບ ່ ງອ ອ ກ ເ ປ ັ ນ 2 ພ າ ຄ (2) ຄ ື

(1) ພາຄນາມອ້ຍອ້ຍຫນູ ແມ ່ ນດ ິ ນ ແ ດ ນ ເ ຂ ຕ ສ ິ ບ ສ ອ ງ ຈ ຸ ໄ ທ ທ ້ ງ ຫ ມ ົ ດ ຕ ອ ນ ນ ັ ້ ນ ຍ ັ ງ ບ ່ ມ ີ ອ ານ າ ຈ ັ ກ ຣ ໍ ໄດອຽດ ແຫ ່ ງ ວ ອ ຽ ດ ນ ານ ຂ ຍ າ ຍ ໄ ປ ຮ ອ ດ ເ ຂ ຕ ນ ັ ້ ນ ມ ິ ແ ຕ ່ ອ ານ າ ຈ ັ ກ ຣ ໍ ຈ ານ ປ າ ທ ີ ່ ຕ ັ ້ ງ ແ ຄ ມ ທ ະ ເ ລ .

(2) ພ າ ຄ ເ ມ ື ອ ງ ຊ ະ ວ າ ຫ ລ ື ເ ມ ື ອ ງ ຊ ້ ອ ຕ ່ ໍ ໄ ປ ຮ ອ ດ ເ ມ ື ອ ງ ພ ວ ນ ຂ ອ ງ ຂ ຸ ນ ເ ຈ ັ ດ ເ ຈ ົ ້ ອ ງ (ຕ ່ ໃ ສ ່ ເ ຂ ຕ ປ ົ ກ ຄ ອ ງ ຂ ອ ງ ອ ານ າ ຈ ັ ກ ຣ ໍ ອ ຽ ງ ຈ ັ ນ ຫ ນ ໍ - ອ ຽ ງ ຄ ໍ າ ຂ ອ ງ ຫ ້ ວ ຄ ໍ າ ບ າ ງ . . . . ຜ ູ ້ ຂ ຽ ນ)

---

(1) Melvelle Bell Grosvenor,The People of Mainland of Southeast Asia, National Geographic magazine, Washington D.C 1971

(2) ຄໍາຈັນທ ໍ ປະດິຕ "ປະວັຕິສາສາຕຣ ໍ ການທູຕລາວ" ໃນອະນຸສອຣນ ໍ ສົມເດັຈພຣະສັງຄະຣາຊລາວ ປີ 2528 ໜ ້ າ 52-53

ຣັຊການພຣະເຈົ້າຂຸນລໍ ນັ້ນ ສົງຄາມກັບຈີນ ຍັງມີຂຶ້ນອີກຄັ້ງໃຫມ່ ຈະເຫັນໃນບັນທຶກຂອງຈີນ ກ່າວໄວ້ວ່າ ໃນປີ ຄ.ສ. 754 ຄື ຈີນ ໄດ້ຍົກກຳລັງເຂົ້າບຸກຕີນ່ານເຈົ້າອີກ ແຕ່ກໍ່ໄດ້ຖືກຕີ ໃຫ້ຖອຍກັບຄືນໄປ ໂດຍທັນທີ. ໃນສົງຄາມຄັ້ງນີ້ ທະຫານຈີນ ໄດ້ຖືກຂ້າຕາຍ ເປັນຈຳນວນມາກ (1)

ພຣະເຈົ້າຂຸນລໍ ສວັຣຄົຕລ່ວງ ຄ.ສ.779 ມີພຣະຣາຊໂອຣົສ ຄົນທີ 1 ຂຶ້ນຄອງຣາຊແທນພຣະນາມວ່າ ອີເມົາຊຶນ (ອ້າຍເມືອງຊະວາ) ຫລື ຂຸນເມືອງຊອ້ນ ຫລືຂຸນເມືອງຊະວາ(ປຣານີ ສີຣິທອຣ ວ່າ ອ້າຍໂໝຊອ້ນ...ສັນນິຕຖານວ່າ ແມ່ນ ຂຸນເມືອງຊະວາ ນັ້ນເອງ..ຜູ້ຂຽນ) ແລະເວລານີ້ ໄດ້ມີການສົງຄາມກັບຈີນອີກຄັ້ງນຶ່ງ ແຕໃນທີ່ສຸດ ກໍ່ມີສັນຍານິຕພາພກັນຂຶ້ນ ຈົນຮອດປີ ຄ.ສ.794 ພຣະອົງຄ໌ ໄດ້ຍົກກຳລັງໂຈມຕີປະເທສທິເບຕ ແລະຍຶດເມືອງຕ່າງໆໄດ້ 16 ຫົວເມືອງ ແລະຍຶດຊັພຍສິນ ຂອງ ປະເທສໄດ້ ເປັນຈຳນວນມາກຫລາຍ.

ໃນປີ 828 ພຣະເຈົ້າພິນໂຍ (ປົງຍູ) ຫລານຂອງພຣະເຈົ້າອ້າຍເມືອງຊົ (826–859) ໄດ້ຍົກທັບບຸກໂຈມຕີ ປະເທສຈີນອີກ ປະສົບຄວາມສຳເຣັດຢ່າງໃຫຽ່ຫລວງ ຄືສາມາຕຍຶດໄດ້ເມືອງ ຊົ ຈ ຍົງຈ ແລະກົງຈ ແລະຖືກຈີນຕີຖອຍກັບຄືນ ແຕ່ກໍ່ຍຶດໄດ້ພົລເມືອງຈຳນວນຫລາຍ ແລະໄດ້ນັກ ປຣາຊ໌ແລະນັກວິຊາການມາກຫລາຍ ເຊິ່ງຕໍ່ມາ ກໍ່ສາມາຕຖ໌ພັທທະນາອານາຈັກຣ໌ນ່ານເຈົ້າ ໃນ ການສົ່ງເສີມດ້ານການຊ່າງ ການທໍ່ໄຫມ ແລະສິລປະກັມ ຣວມທັງວັນນະກັມ ຕ່າງໆອີກດ້ວຍ.

ໃນ ຄ.ສ. 858 ຫລື ພ.ສ. 1401 ອານາຈັກຣ໌ນ່ານເຈົ້າ ຍົກທັບເຂົ້າໂຈມຕີວຽດນາມ ທີ່ເມືອງຕົ້ງ ແກ ໄດ້ສຳເຣັດ ໂດຍຍຶດໄດ້ຊັພຍ໌ສິນຂອງພຣະຣາຊວັງ ເປັນຈຳນວນມາກຫລາຍ.

(ຕໍ່ໄປ ຈະຂໍ່ໃຊ້ ປີ ຄ.ສ. ເປັນຫລັກ)

****

ໂອຣົສຂອງພຣະເຈົ້າພິນໂຍ ພຣະນາມວ່າ ເຈົ້າຫລວງ (**Tsui Lung**) ເມື່ອໄດ້ຂຶ້ນຄອງຣາຊສົມບັຕແທນພຣະຣາຊປິດາ ໄດ້ຊົງປະກາສພຣະອົງຄ໌ເອງ ເປັນຈັກກະພັຕ ເທົ່ຽມກັບຈີນ ເປັນຄັ້ງທຳ ອິດ ໃນປີ ຄ.ສ.859 ການກະທຳນີ້ ພາໃຫ້ຈີນມີຄວາມຂັດເຄືອງໃຈທີ່ສຸດ ເພາະແຕ່ໃດໆມາ ລາວ ບໍ່ເຄີຍມີຕຳແໜ່ງນີ້ ໃຊ້ ຄື ບໍ່ເຄີຍປະກາສຕົວກະສັຕຣິຍ໌ ເປັນຈັກພັຕເທົ່ຽມຈີນ ຈັກເທື່ອເລີຍ, ໃນສມັຍພຣະເຈົ້າສວົ່ນສົ່ງ (**Suentsong**) ຈັກກະພັຕທີ 16 ແຫ່ງຣາຊວົ່ງສ໌ຖັງ ຈີນຈົ່ງສແດງຄວາມ ບໍ່ດີໃຈ ແລະບໍ່ຍອມສົ່ງທູຕມາຮ່ວມ ໃນພິທີພຣະບໍຣົມສົພ ຂອງພຣະເຈົ້າພິນໂຍ ແຕ່ຢ່າງໃດ.

ປີ ຄ.ສ.863 ນ່ານເຈົ້າຍຶດເອົາປະເທສອານາມ (ແກວເທົ່ຽ) ໄດ້ສຳເຣັດ ແລະສາມາຕຖ໌ປົກຄອງມາໄດ້ ເປັນເວລາ 3 ປີ ແຕ່ໃນເວລາຕໍ່ມາ ກໍ່ຖືກວຽດນາມ ກອບກູ້ຄືນໄດ້.

---

(1) W.A.R Wood, History of Siam, Chiangmai 1924 Page 33-34

ອານາຈັກຣ໌ມ່ານເຈົ້າຖືກຍຶດຄອງ ແລະຖືກຍຶດເອົາເປັນຂອງຈີນ ຢ່າງສົມບູຣນ໌ ໃນຍຸຄຣາຊວົງສ໌ ຫຍວນ ສມັຍຈັກກະພັຕກຸໄບລຂ່ານ ແຕ່ປີ 1253 ເປັນຕົ້ນມາ.

ຂຸນລໍ ກັບການປົກຄອງ ເມືອງຊົວ ຫລືຊະວາ ແລະຣາຊວົງສ໌ເດີມ ຂອງເມືອງຊະວາ

****

